ພະຍາກອນ ວຽງຈັນ
21–30°C
ວັນພະຫັດ 26/11 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນພະຫັດ 26 ພະຈິກ 2026 · ສະບັບທີ 030 | ສະຫຼຸບຂ່າວປະຈຳວັນພຸດ 25 ພະຈິກ 2026 · 24 ຂ່າວ | 20 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ໄລຟ້ສະໄຕລ້** · 10:01 ໂມງ · ອ່ານ 1506 ຄັ້ງ

ເຈົ້າຂອງແບຣນ "ສາວກົມ" ອອກຖະແຫຼງການຂໍໂທດ ຫຼັງຄົບວິດີໂອ ງານບຸນທາດຫຼວງສ້າງກະແສວິພາກວິຈານ



ຈາກກະແສດຣາມ່າໃນສັງຄົມອອນລາຍ ກ່ຽວກັບຄົບວິດີໂອຂອງແບຣນໜຶ່ງໃນງານບຸນທາດຫຼວງ ທີ່ມີການນຳໃຊ້ຖ້ອຍຄຳບໍ່ເໝາະສົມ ເຮັດໃຫ້ຜູ້ຄົນຈຳນວນຫຼາຍບໍ່ພໍໃຈ ລ່າສຸດ ເຈົ້າຂອງແບຣນ "ສາວກົມ" ໄດ້ອອກມາກ່າວຄຳຂໍໂທດຢ່າງເປັນທາງການ ແລະ ຍອມຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ.

ຕົ້ນເຫດຂອງເລື່ອງ

ເລື່ອງລາວເລີ່ມຈາກຄົບວິດີໂອທີ່ຖືກເຜີຍແຜ່ອອກມາ ເຊິ່ງມີຄຳເວົ້າທີ່ຖືກວິຈານວ່າບໍ່ເໝາະສົມ ແລະ ບໍ່ໃຫ້ກຽດລູກຄ້າ ເຮັດໃຫ້ເກີດການແບ່ງປັນ ແລະ

ຕໍ່ໜ້າ 2

◆ **ຂ່າວພາຍໃນ** · 16:42 ໂມງ

ບຸກຄົ້ນຫ້ອງເຊົ່າກາງເມືອງຊຳເໜືອ! ປກສ ແຂວງຫົວພັນ ຈັບ ພໍ່ຄ້າໝຸ່ມອາຍຸ 18 ປີ ຢຶດຢາບ້າ 12,000 ເມັດ ພ້ອມຢາສູບ ໄຟຟ້າ ແລະ ໃບກະທ່ອມ



ເຈົ້າໜ້າທີ່ພະແນກສະກັດກັ້ນ ແລະ ຕ້ານຢາເສບຕິດ ຫ້ອງຕຳຫຼວດ ປກສ ແຂວງຫົວພັນ ບຸກກວດຄົ້ນຫ້ອງເຊົ່າ ແຫ່ງໜຶ່ງຢູ່ເຂດເມືອງຊຳເໜືອ ສາມາດກັກຕົວຜູ້ຄ້າຢາເສບຕິດ ລາຍຍ່ອຍອາຍຸພຽງ 18 ປີ ພ້ອມຢຶດຂອງກາງຢາບ້າ ຈຳນວນຫຼາຍເຖິງ 12,000 ເມັດ, ຢາສູບໄຟຟ້າ, ນ້ຳຢາແກ້ໄອ ແລະ ໃບກະທ່ອມ ມາດຳເນີນຄະດີຕາມກົດໝາຍ.

ອີງຕາມການລາຍງານຂອງ ປກສ ແຂວງຫົວພັນ ໃຫ້ຮູ້ວ່າ: ໃນວັນທີ 23 ພະຈິກ 2026 ຜ່ານມາ, ເຈົ້າໜ້າທີ່

ຕໍ່ໜ້າ 2

ໃນສະບັບນີ້

2 ໄລຟ້ສະໄຕລ້
2 ຂ່າວພາຍໃນ
8 ເສດຖະກິດ-ສັງຄົມ
10 ເຕັກໂນໂລຊີ
11 ສາລະໜ້າຮູ້
12 ຂ່າວຕ່າງປະເທດ
18 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
19 ແຈ້ງການ
20 ທ້າຍສະບັບ



◆ **ແຈ້ງການ** · 09:43 ໂມງ

ແຈ້ງການມອດໄຟ ວັນທີ 26,27,30/11/2026

ອ່ານໜ້າ 19 ►



◆ **ແຈ້ງການ** · 14:50 ໂມງ

ແຈ້ງການມອດໄຟ ວັນທີ 27,28,29/11/2026...

ອ່ານໜ້າ 19 ►



◆ **ຂ່າວຕ່າງ ປະເທດ** · 09:37 ໂມງ

ນາທີລະທຶກ! ຕຳຫຼວດ ໄທສົນທິກຳລັງບຸກ ຊ່ວຍເຫຼືອ 2 ສາວຊາ...

ອ່ານໜ້າ 12 ►

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ເຈົ້າຂອງແບຣນ “ສາວກົມ” ອອກຖະແຫຼງການຂໍໂທດ ຫຼັງຄົບວິດີ... (ຕໍ່ຈາກໜ້າ 1)

ຖືກຖຽງກັນຢ່າງກວ້າງຂວາງໃນສັງຄົມອອນລາຍ.

ຍອມຮັບຜິດຊອບໃນຖານະເຈົ້າຂອງແບຣນ

ສາວກົມໄດ້ກ່າວຂໍໂທດຕໍ່ສັງຄົມ ແລະ ລູກຄ້າທຸກທ່ານຈາກໃຈຈິງ ຕໍ່ກໍລະນີການໃຊ້ຄຳເວົ້າທີ່ບໍ່ເໝາະສົມຂອງທີມງານທີ່ສ້າງຄວາມບໍ່ພໍໃຈ ແລະ ສົ່ງຜົນກະທົບຕໍ່ຄວາມຮູ້ສຶກຂອງຫຼາຍຄົນ.

ນາງຍອມຮັບວ່າ ໃນຖານະເຈົ້າຂອງແບຣນ ມີຄວາມບົກພ່ອງໃນການກວດກາ ແລະ ກັ່ນຕອງເນື້ອຫາຂອງຄົບວິດີໂອຮ່ວມກັບທີມງານກ່ອນນຳອອກເຜີຍແຜ່ ເຊິ່ງເປັນຂໍ້ບົກພ່ອງດ້ານການບໍລິຫານຈັດການທີ່ບໍ່ຄວນມອງຂ້າມ ພ້ອມຢືນຢັນວ່າ ຈະບໍ່ປັດຄວາມຮັບຜິດຊອບໃຫ້ທີມງານພຽງຝ່າຍດຽວ.

ແນວທາງປັບປຸງຕໍ່ໄປ

ສາວກົມໃຫ້ຄຳໝັ້ນວ່າຈະຮຽນຮູ້ຈາກເຫດການຄັ້ງນີ້ ແລະ ປັບປຸງການເຮັດວຽກໃຫ້ຮອບຄອບຂຶ້ນ ໂດຍ:

ເພີ່ມຄວາມເຂັ້ມງວດ ໃນການກວດສອບເນື້ອຫາກ່ອນໂພສທຸກຄັ້ງ

ກຳຊັບທີມງານ ໃຫ້ຕະໜັກເຖິງຄວາມເໝາະສົມໃນການສື່ສານ ແລະ ໃຫ້ກຽດຜູ້ອື່ນຢູ່ສະເໝີ

ພິສູດດ້ວຍການກະທຳ

ສາວກົມກ່າວວ່າ ເຂົ້າໃຈດີວ່າຄວາມໄວ້ວາງໃຈຈາກລູກຄ້າ ແລະ ສັງຄົມ ແມ່ນສິ່ງສຳຄັນທີ່ສຸດໃນການສ້າງແບຣນ ແລະ ຮັບຮູ້ວ່າຄຳຂໍໂທດໃນມື້ນີ້ອາດບໍ່ສາມາດລຶບລ້າງຄວາມຮູ້ສຶກບໍ່ດີໄດ້ທັນທີ ແຕ່ຈະຂໍພິສູດດ້ວຍການກະທຳ ແລະ ການປັບປຸງທີ່ເຫັນເປັນຮູບປະທຳ.

ໃນຕອນທ້າຍຂອງຖະແຫຼງການ ນາງໄດ້ກ່າວຂໍໂທດອີກຄັ້ງ ພ້ອມຂອບໃຈທຸກຄຳຕິຊົມ ແລະ ຄຳເຕືອນທີ່ຊ່ວຍສະທ້ອນຂໍ້ບົກພ່ອງ ແລະ ຢືນຢັນວ່າຈະນຳທຸກຄວາມຄິດເຫັນໄປປັບປຸງ ເພື່ອບໍ່ໃຫ້ເຫດການແບບນີ້ເກີດຂຶ້ນອີກ.

ບຸກຄົນຫ້ອງເຊົ່າກາງເມືອງຊໍາເໜືອ! ປກສ ແຂວງຫົວພັນ ຈັບພໍ... (ຕໍ່ຈາກໜ້າ 1)

ຕຳຫຼວດພະແນກສະກັດກັ້ນ ແລະ ຕ້ານຢາເສບຕິດ ຫ້ອງຕຳຫຼວດ ປກສ ແຂວງຫົວພັນ ໄດ້ຮັບແຈ້ງຂ່າວຈາກພົນລະເມືອງດີວ່າ ມີການມົ້ວສຸມ ແລະ ລັກລອບຄ້າ-ຂາຍໃນກະທ່ອມ ຢູ່ເຂດຫ້ອງເຊົ່າ ບ້ານບາວຽງ ເມືອງຊໍາເໜືອ ແຂວງຫົວພັນ. ພາຍຫຼັງໄດ້ຮັບແຈ້ງ ຈຶ່ງໄດ້ແຕ່ງຕັ້ງກຳລັງວິຊາສະເພາະລົງຕິດຕາມກວດກາ ແລະ ພົບເຫັນວ່າມີມູນຄວາມຈິງແທ້.

ເຈົ້າໜ້າທີ່ຈຶ່ງໄດ້ວາງແຜນເຂົ້າກວດຄົ້ນຫ້ອງເຊົ່າເປົ້າໝາຍ ແລະ ສາມາດກັກຕົວຜູ້ຖືກຫາໄດ້ 1 ຄົນ ຊື່ ທ້າວ ຍາ ກົວອ່ຽ ອາຍຸ 18 ປີ ປະຊາຊົນບ້ານຫ້ວຍຊາຍ ເມືອງແອດ ແຂວງຫົວພັນ ທີ່ພັກເຊົ່າຢູ່ພາຍໃນຫ້ອງເຊົ່າດັ່ງກ່າວ.

ຜ່ານການກວດຄົ້ນພາຍໃນຫ້ອງເຊົ່າ ເຈົ້າໜ້າທີ່ສາມາດຍຶດຂອງກາງໄດ້ຫຼາຍລາຍການ ປະກອບມີ:

ຢາບ້າ: ຈຳນວນ 2 ແພັກ ລວມທັງໝົດ 12,000 ເມັດ.

ຢາສູບໄຟຟ້າ: ຈຳນວນ 86 ອັນ.

ນ້ຳຢາ Datissin (ດາຕິສຊິນ): ຈຳນວນ 23 ກ້ອງ.

ໃບກະທ່ອມ: ນ້ຳໜັກ 1 ກິໂລກຣາມ.

ຜ່ານການສືບສວນ-ສອບສວນເບື້ອງຕົ້ນ, ທ້າວ ຍາ ກົວອ່ຽ ໄດ້ຮັບສາລະພາບວ່າ ຢາເສບຕິດ ແລະ ເຄື່ອງຂອງກາງທັງໝົດທີ່ເຈົ້າໜ້າທີ່ກວດພົບນັ້ນ ແມ່ນເປັນຂອງຕົນເອງແທ້ ໂດຍໄດ້ນຳມາເກັບໄວ້ເພື່ອລັກລອບຈຳໜ່າຍຂາຍຍ່ອຍໃຫ້ແກ່ກຸ່ມໄວໜຸ່ມ ແລະ ຜູ້ມົ້ວສຸມໃນພື້ນທີ່.

ປັດຈຸບັນ, ເຈົ້າໜ້າທີ່ພະແນກສະກັດກັ້ນ ແລະ ຕ້ານຢາເສບຕິດ ຫ້ອງຕຳຫຼວດ ປກສ ແຂວງຫົວພັນ ໄດ້ນຳຕົວຜູ້ຖືກຫາພ້ອມຂອງກາງທັ້ງໝົດ ມາກັກຂັງເພື່ອສືບສວນຂະຫຍາຍຜົນຫາຜູ້ຮ່ວມຂະບວນການ ແລະ ດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍຢ່າງເຂັ້ມງວດ.

ແຫຼ່ງທີ່ມາຕົ້ນສະບັບ: ເພຈ ທາງການ ຂ່າວ ປກສ ແຂວງຫົວພັນ News.

ຂ່າວພາຍໃນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 10:43 ໂມງ · ອ່ານ 13 ຄັ້ງ

ຖືກບຸກຈັບຄາທີ່! ເຊົ່າພື້ນທີ່ສວນຮົກເຮ້ອ ເປັນຖານກໍ່ອາຊະຍາກຳທາງອິນເຕີເນັດ ແຕ່ບໍ່ລອດ ຖືກເຈົ້າໜ້າທີ່ຈັບຕົວໄດ້



ເຈົ້າໜ້າທີ່ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ດຳເນີນການກວດຄົ້ນ ແລະ ປາບປາມກຸ່ມກໍ່ອາຊະຍາກຳທາງອິນເຕີເນັດ ຢູ່ເຂດບ້ານໜອງໄຮ ເມືອງຫາດຊາຍພອງ ນະຄອນຫຼວງວຽງຈັນ ໃນວັນທີ 20 ພະຈິກ 2026, ຜ່ານການປະຕິບັດໜ້າທີ່ ເຈົ້າໜ້າທີ່ສາມາດກັກຕົວຜູ້ຖືກຫາໄດ້ທັງໝົດ 22 ຄົນ; ໃນນີ້ ສັນຊາດຈີນ 21 ຄົນ ແລະ ສັນຊາດ ສ.ເກົາຫຼີ 1 ຄົນ.

ພ້ອມນີ້, ເຈົ້າໜ້າທີ່ຍັງໄດ້ກວດພົບ ແລະ ຍຶດຂອງກາງທີ່ນຳໃຊ້ເຂົ້າໃນການກະທຳຜິດ ປະກອບມີ: ຄອມພິວເຕີຕັ້ງໂຕະ ຈຳນວນ 22 ໜ່ວຍ ແລະ ໂທລະສັບມືຖື ຈຳນວນ 44 ໜ່ວຍ.

ກຸ່ມຜູ້ຖືກຫາດັ່ງກ່າວ ໄດ້ລັກລອບເຊົ່າພື້ນທີ່ດິນສວນທີ່ມີກຳແພງສູງ ອ້ອມຮອບພ້ອມທັງປ່ອຍໃຫ້ມີຕົ້ນໄມ້ ແລະ ປ່າຫຍ້າຂຶ້ນສູງປົກຄຸມໜາແໜ້ນເພື່ອອຳພາງ ແລະ ຫຼົບຫຼີກການກວດກາຂອງເຈົ້າໜ້າທີ່. ແນວໃດກໍຕາມ, ດ້ວຍວຽກງານວິຊາສະເພາະ ແລະ ການສືບຄົ້ນຢ່າງເປັນລະບົບ, ເຈົ້າໜ້າທີ່ສາມາດກຳນົດເປົ້າໝາຍ ແລະ ສາມາດຈັບຕົວໄດ້ ເພື່ອດຳເນີນຄະດີຕາມລະບຽບກົດໝາຍຕໍ່ໄປ.

ຂ່າວ: ຄຳໂຖ

ຂ່າວພາຍໃນ · 09:34 ໂມງ · ອ່ານ 11 ຄັ້ງ

ສານຂອງ ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເນື່ອງໃນໂອກາດ ລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ



ສານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເນື່ອງໃນໂອກາດ ລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ

ເນື່ອງໃນໂອກາດ ລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ

ພີ່ນ້ອງຮ່ວມຊາດ ທີ່ຮັກແພງທັງຫລາຍ!

ເນື່ອງໃນໂອກາດ ລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ ຄົບຮອບ 26 ປີ (25/11/2000-25/11/2026) ສປປ ລາວ ກໍຄືບັນດາປະເທດໃນໂລກ ໄດ້ຈັດຂະບວນການລະນຶກວັນດັ່ງກ່າວ, ຊຶ່ງໃນປີ 2026 ນີ້ ແມ່ນພາຍໃຕ້ຫົວຂໍ້ “ຮ່ວມແຮງຮ່ວມໃຈກັນ ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ຮັບປະກັນຄວາມຍຸຕິທຳ, ປົກປ້ອງຜູ້ຖືກເຄາະຮ້າຍ, ລົງໂທດຜູ້ກະທຳຜິດຕາມກົດໝາຍ ຢ່າງເຂັ້ມງວດ”, ຂ້າພະເຈົ້າ ຕາງໜ້າ ພັກ ແລະ ລັດຖະບານ ແຫ່ງ ສປປ ລາວ, ຂໍສົ່ງຄວາມຢັ່ງມຢາມຖາມຂ່າວອັນອົບອຸ່ນ, ຄວາມສາມັກຄີຮັກແພງ, ຄວາມເປັນຫ່ວງເປັນໃຍ ມາຍັງພໍ່ແມ່ປະຊາຊົນລາວບັນດາເຜົ່າ, ເພື່ອນມິດສະຫາຍ ແລະ ພະນັກງານ-ລັດຖະກອນ, ທະຫານຕຳຫລວດທຸກທົ່ວໜ້າ ໃນຂອບເຂດທົ່ວປະເທດ.

ພີ່ນ້ອງຮ່ວມຊາດ ທີ່ນັບຖື ແລະ ຮັກແພງ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

ຕໍ່ໜ້າ 4

ສານຂອງ ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ... (ຕໍ່ຈາກໜ້າ 3)

ແລະ ເດັກຍິງ ແມ່ນການລະເມີດສິດທິພື້ນຖານ ແລະ ກຽດສັກສີຂອງມະນຸດ, ເປັນໄພຂົ່ມຂູ່ຕໍ່ຄອບຄົວ, ສຸຂະພາບ, ການສຶກສາ ແລະ ການພັດທະນາປະເທດຊາດ. ການຢຸດຕິຄວາມຮຸນແຮງດັ່ງກ່າວ ຈຶ່ງເປັນໜ້າທີ່ຂອງທົ່ວສັງຄົມ. ໃນໄລຍະຜ່ານມາ, ພັກ ແລະ ລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສຳຄັນຕໍ່ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດທິຂອງແມ່ຍິງ ແລະ ເດັກຍິງ, ໄດ້ສ້າງ ແລະ ປັບປຸງກົນໄກການຊ່ວຍເຫລືອແບບຄົບຊຸດ, ສ້າງສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ທີ່ຂຶ້ນກັບສະຫະພັນແມ່ຍິງລາວ ໃນ 8 ແຂວງທົ່ວປະເທດ, ມີຈຸດບໍລິການດ້ານສຸຂະພາບ ແລະ ຈຸດປະສານງານໃນທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອໃຫ້ການຊ່ວຍເຫລືອແມ່ຍິງ ແລະ ເດັກຍິງ ທີ່ຖືກເຄາະຮ້າຍແບບຮອບດ້ານ ເປັນຕົ້ນ ດ້ານສຸຂະພາບກາຍ, ສຸຂະພາບຈິດໃຈ, ໃຫ້ທີ່ພັກຊົ່ວຄາວ, ການເຂົ້າເຖິງຂະບວນຍຸຕິທຳ ຕະຫລອດຮອດການຊ່ວຍສ້າງວິຊາຊີບ ເພື່ອໃຫ້ເຂົາເຈົ້າສາມາດມີວຽກເຮັດງານທຳ ໃນເວລາອອກຈາກສູນຊ່ວຍເຫລືອ ກັບຄືນສູ່ຊຸມຊົນ.

ໃນປັດຈຸບັນ, ທ່າມກາງສະພາບການໂລກ ທີ່ມີການຜັນປ່ຽນຢ່າງໄວວາ ມັນໄດ້ສ້າງສິ່ງທ້າທາຍໃໝ່ຫລາຍຮູບແບບ, ລວມທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ. ເຖິງແມ່ນວ່າຫລາຍປະເທດໃນໂລກ ໄດ້ພະຍາຍາມປັບປຸງນິຕິກຳ ກໍຄືກົນໄກມາດຕະການປົກປ້ອງແມ່ຍິງ ແລະ ເດັກຍິງ, ແຕ່ການປົກປ້ອງ ແລະ ຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ຍັງບໍ່ທັນມີປະສິດທິພາບ ເທົ່າທີ່ຄວນ. ຢູ່ ສປປ ລາວ ກໍເຊັ່ນກັນ, ຜູ້ຖືກເຄາະຮ້າຍບາງກໍລະນີ ຍັງບໍ່ກ້າຂໍຄວາມຊ່ວຍເຫລືອ ເພາະຄວາມຢ້ານກົວ, ຄວາມກັງວົນ ຫລື ຄວາມບໍ່ໝັ້ນໃຈໃນຂະບວນການຍຸຕິທຳ ບວກກັບຄວາມເຊື່ອແບບດັ້ງເດີມ ທີ່ເຫັນວ່າ ຄວາມຮຸນແຮງໃນຄອບຄົວເປັນ “ເລື່ອງສ່ວນຕົວ”, ຊຶ່ງກາຍເປັນອຸປະສັກ ທີ່ສ້າງຊ່ອງຫວ່າງ ແລະ ເຮັດໃຫ້ຜູ້ກະທຳຜິດ ບໍ່ໄດ້ຮັບໂທດ. ເພື່ອຮັບປະກັນຄວາມຍຸຕິທຳ, ປົກປ້ອງຜູ້ຖືກເຄາະຮ້າຍ ແລະ ລົງໂທດຜູ້ກະທຳຜິດ ຕາມຫົວຂໍ້ ຂອງການລະນຶກວັນສາກົນດັ່ງກ່າວ ໃນປີນີ້, ຂ້າພະເຈົ້າ ຂໍເນັ້ນໜັກບາງຈຸດທີ່ສຳຄັນ ດັ່ງນີ້:

1. ອົງການຈັດຕັ້ງພັກ-ລັດ ທີ່ກ່ຽວຂ້ອງ ຕ້ອງເພີ່ມທະວີການໂຄສະນາເຜີຍແຜ່ໃຫ້ຄອບຄົວ, ໂຮງຮຽນຊຸມຊົນ, ສັງຄົມ ຮ່ວມກັນປຸກຝັງຈິດສຳນຶກ ໃນການເຄົາລົບເຊິ່ງກັນ ແລະ ກັນ, ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ວິທີແກ້ໄຂຄວາມຂັດແຍ່ງ ໂດຍບໍ່ໃຊ້ຄວາມຮຸນແຮງ; ໃຫ້ປອງຊິນລາວທຸກຄົນ ບໍ່ເມີນເສີຍ ເມື່ອເຫັນເຫດການຄວາມຮຸນແຮງ, ແຕ່ຈົ່ງກ້າຫານລາຍງານ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ເພາະ “ການເມີນເສີຍ ຖືເປັນການສົ່ງເສີມຄວາມຮຸນແຮງທາງອ້ອມ” ແລະ ຕ້ອງຮັບຮູ້ວ່າ ການໃຊ້ຄວາມຮຸນແຮງ ແມ່ນເປັນຄວາມຜິດທາງອາຍາ.

2. ສຸມໃສ່ໃຫ້ການປົກປ້ອງ ແລະ ຊ່ວຍເຫລືອແບບຮອບດ້ານ, ຖືເອົາຄວາມປອດໄພ, ກຽດສັກສີ ແລະ ຄວາມຖືກຕ້ອງ ຂອງຜູ້ຖືກເຄາະຮ້າຍ ເປັນໃຈກາງ ເພື່ອຮັບປະກັນ ໃຫ້ຜູ້ຕ້ອງການຄວາມຊ່ວຍເຫລືອ ໄດ້ຮັບການປິ່ນປົວ, ຄຳປຶກສາ, ການຊ່ວຍເຫລືອທາງກົດໝາຍ ແລະ ມີສະຖານທີ່ພັກເຊົາ ທີ່ປອດໄພຕາມຄວາມຈຳເປັນ.

3. ເຈົ້າໜ້າທີ່ທຸກຂັ້ນ ຕ້ອງຍຶດໝັ້ນຄວາມທ່ຽງທຳ, ໂປ່ງໃສ, ດຳເນີນການຢ່າງວ່ອງໄວ, ບໍ່ເລືອກປະຕິບັດໃນການສືບສວນ, ດຳເນີນຄະດີ ແລະ ລົງໂທດຜູ້ກະທຳຜິດຕາມກົດໝາຍ ຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມຍຸຕິທຳ ໃຫ້ຜູ້ຖືກເຄາະຮ້າຍ.

ພີ່ນ້ອງຮ່ວມຊາດ ທີ່ຮັກແພງ!

ໃນໂອກາດນີ້, ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງທຸກພາກສ່ວນໃນສັງຄົມ ຈົ່ງພ້ອມຈິດພ້ອມໃຈ ລົງມືປະຕິບັດຢ່າງຈິງຈັງ ເພື່ອສ້າງສັງຄົມລາວ ໃຫ້ກາຍເປັນສັງຄົມແຫ່ງຄວາມສະເໝີພາບ, ຍຸຕິທຳ ແລະ ສີວິໄລ. ປະຊາຊົນທຸກຄົນ ບໍ່ວ່າ ຍິງ ຫລື ຊາຍ, ຜູ້ໃຫຍ່ ຫລື ເດັກນ້ອຍ ໄດ້ຮັບການປົກປ້ອງ, ມີສິດສະເໝີພາບ ຕໍ່ໜ້າກົດໝາຍ ແລະ ດຳລົງຊີວິດຢ່າງປອດໄພ, ປາສະຈາກຄວາມຮຸນແຮງທຸກຮູບແບບ.

ຂໍຖືໂອກາດນີ້ ສະແດງຄວາມຂອບໃຈ ຢ່າງຈິງໃຈ ມາຍັງອົງການຈັດຕັ້ງສາກົນ, ປະເທດເພື່ອນມິດ ແລະ ຄູ່ຮ່ວມພັດທະນາ ທີ່ໄດ້ຄຽງບ່າຄຽງໄຫລ່ ສະໜັບສະໜຸນ ສປປ ລາວ ດ້ວຍດີຕະຫລອດມາ.

ທ້າຍສຸດນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ ການຈັດຕັ້ງປະຕິບັດຂະບວນການລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ໃນປີ 2026 ຈົ່ງບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້. ອວຍພອນໃຫ້ພີ່ນ້ອງຮ່ວມຊາດ ຈົ່ງມີຄວາມສຸກ, ປາສະຈາກຄວາມຮຸນແຮງທຸກປະເພດ, ຂໍໃຫ້ພວກເຮົາທຸກຄົນ “ຮ່ວມແຮງຮ່ວມໃຈກັນ ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ”.

ທີ່ມາ: ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

◆ ຂ່າວພາຍໃນ · 15:21 ໂມງ · ອ່ານ 10 ຄັ້ງ

ປກສ ແຂວງບໍ່ແກ້ວ ກວດພົບຈຸດຕ້ອງສົງໄສ ຮັງສະແກມເມີ ຈັບໄດ້ 80 ຄົນ ມີ 5 ສັນຊາດ ຢຶດໂທລະສັບຈຳນວນ 1,758 ເຄື່ອງ!



ໃນວັນທີ 18-19 ພະຈິກ 2026 ຜ່ານມາ, ເຈົ້າໜ້າທີ່ພະແນກຕຳຫຼວດເສດຖະກິດ ໄດ້ປະສານສົມທົບກັບພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຫ້ອງສັນຕິບານ ປກສ ແຂວງບໍ່ແກ້ວ, ພ້ອມດ້ວຍ ປກສ ເມືອງຜາອຸດົມ ແລະ ເມືອງຕົ້ນເຜິ້ງ ລົງກວດກາຈຸດຕ້ອງສົງໄສ ທີ່ມີການລັກລອບເຄື່ອນໄຫວກະທຳຜິດຖານສໍ້ໂກງຊັບຜ່ານລະບົບໂທລະຄົມ (Scam) ຢູ່ບ້ານຜາອຸດົມ ເມືອງຜາອຸດົມ ແລະ ໂຮງແຮມຊຸນທຽນ ບ້ານສາມຫຼ່ຽມຄຳ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ.

ຜົນການກວດກາ ພົບຄົນຕ່າງປະເທດທັງໝົດ 80 ຄົນ, ເປັນເພດຍິງ 8 ຄົນ ປະກອບມີ:

ສັນຊາດຈີນ 70 ຄົນ, ຍິງ 3 ຄົນ
ສັນຊາດໄຕ້ຫວັນ 2 ຄົນ
ສັນຊາດມຽນມາ 5 ຄົນ, ຍິງ 3 ຄົນ
ສັນຊາດຟີລິບປິນ 1 ຄົນ, ຍິງ 1 ຄົນ
ສັນຊາດຫວຽດນາມ 2 ຄົນ

ນອກຈາກນັ້ນ ເຈົ້າໜ້າທີ່ຍັງໄດ້ກວດຢຶດອຸປະກອນ ແລະ ເຄື່ອງມືເອເລັກໂຕຣນິກທີ່ສົງໄສວ່ານຳໃຊ້ເຂົ້າໃນການກະທຳຜິດ ປະກອບມີ:

ຄອມພິວເຕີຕັ້ງໂຕະ 55 ເຄື່ອງ
ຄອມພິວເຕີໂນດບຸກ 30 ເຄື່ອງ
ສະໜອງຄອມພິວເຕີ 14 ເຄື່ອງ
ໂທລະສັບມືຖື 1,758 ເຄື່ອງ
ແທັບເລັດ 2 ເຄື່ອງ
ຊຸດເຄື່ອງແບບເຈົ້າໜ້າທີ່ຈີນ 1 ຊຸດ
ເຄື່ອງດູດສັນຍານອິນເຕີເນັດ 1 ເຄື່ອງ

ປັດຈຸບັນ ເຈົ້າໜ້າທີ່ຕຳຫຼວດກອງບັນຊາການ ປກສ ແຂວງບໍ່ແກ້ວ ກຳລັງດຳເນີນການສືບສວນ-ສອບສວນ ເພື່ອຂະຫຍາຍຜົນ ແລະ ດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍ.

ທີ່ມາ: ປກສ ແຂວງບໍ່ແກ້ວ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 16:06 ໂມງ · ອ່ານ 9 ຄັ້ງ

ສະຫວັນນະເຂດ ປະກາດໃຊ້ມາດຕະການເດັດຂາດ! ລຸຍປາບປາມການລັກລອບຂຸດແຮ່-ຕັດໄມ້ເຖື່ອນ ແລະ ຈຳກັດການນຳເຂົ້າພືດຜັກ-ຊີ້ນສັດ



ອົງການປົກຄອງແຂວງສະຫວັນນະເຂດ ໄດ້ປະກາດຍົກລະດັບມາດຕະການຂັ້ນສູງສຸດ ເພື່ອແກ້ໄຂບັນຫາການລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດແບບຜິດກົດໝາຍ ພ້ອມທັງອາງມະໂຍບາຍເຂັ້ມງວດໃນການຈຳກັດການນຳເຂົ້າສິນຄ້າກະສິກຳ ແລະ ຊີ້ນສັດຈາກຕ່າງປະເທດ ແນໃສ່ປົກປ້ອງສິ່ງແວດລ້ອມ ແລະ ຊຸກຍູ້ການຜະລິດພາຍໃນໃຫ້ເຂັ້ມແຂງ.

ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ V ໃນວັນທີ 24 ພະຈິກ 2026 ພາຍໃຕ້ການເປັນປະທານຂອງ ທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງສະຫວັນນະເຂດ ໄດ້ເນັ້ນໜັກໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ຈັດຕັ້ງປະຕິບັດ 2 ມາດຕະການຫຼັກຢ່າງເດັດຂາດ ຄື:

1. ປາບປາມການລັກລອບຂຸດແຮ່ ແລະ ຕັດໄມ້ເຖື່ອນ:

ທາງແຂວງຈະນຳໃຊ້ມາດຕະການທາງກົດໝາຍຂັ້ນສູງສຸດຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ກຸ່ມຄົນທີ່ລັກລອບຂຸດຄົ້ນແຮ່ທາດ ແລະ ຕັດໄມ້ທຳລາຍປ່າໂດຍບໍ່ໄດ້ຮັບອະນຸຍາດ ເພື່ອສະກັດກັ້ນການທຳລາຍສິ່ງແວດລ້ອມ ແລະ ປ້ອງກັນການຮົ່ວໄຫຼຂອງລາຍຮັບແຫ່ງຊາດ.

2. ຈຳກັດການນຳເຂົ້າພືດຜັກ ແລະ ຊີ້ນສັດ:

ເພີ່ມທະວີການກວດກາຕາມດ່ານຊາຍແດນ ແລະ ຈຳກັດການນຳເຂົ້າພືດຜັກ, ອາຫານທະເລ ແລະ ຊີ້ນສັດປະເພດຕ່າງໆ ທີ່ພາຍໃນແຂວງສາມາດຜະລິດໄດ້ເອງ. ມາດຕະການນີ້ບໍ່ພຽງແຕ່ຊ່ວຍປົກປ້ອງຜູ້ບໍລິໂພກຈາກສານເຄມີຕົກຄ້າງ ແລະ ພະຍາດລະບາດເທົ່ານັ້ນ ແຕ່ຍັງເປັນການສ້າງຕະຫຼາດຮອງຮັບໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການພາຍໃນແຂວງ ທັງຊ່ວຍຫຼຸດຜ່ອນການໃຊ້ຈ່າຍເງິນຕາຕ່າງປະເທດອີກດ້ວຍ.

ມາດຕະການດັ່ງກ່າວ ຖືເປັນບາດກ້າວສຳຄັນຂອງແຂວງສະຫວັນນະເຂດ ໃນການຈັດລະບຽບສັງຄົມ ແລະ ຟື້ນຟູເສດຖະກິດທ້ອງຖິ່ນໃຫ້ມີຄວາມຍືນຍົງ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ຂ່າວພາຍໃນ · 14:06 ໂມງ · ອ່ານ 8 ຄັ້ງ

ຄຸມເຂັ້ມການສົ່ງອອກ! ກົມປ່າໄມ້ ວາງລະບົບກວດສອບຍ້ອນກັບ “ລີງຫາງຍາວ” ຢ້ຳຫ້າມນຳລີງຈາກທຳມະຊາດເຂົ້າລະບົບການຄ້າເດັດຂາດ



ກົມປ່າໄມ້ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ຈັດກອງປະຊຸມປຶກສາຫາລື ເພື່ອກຽມຄວາມພ້ອມໃຫ້ແກ່ບັນດາຜູ້ປະກອບການ ກ່ຽວກັບການນຳໃຊ້ລະບົບຕິດຕາມການສົ່ງອອກລີງຫາງຍາວ (Macaca fascicularis) ໃຫ້ສອດຄ່ອງຕາມຄຳແນະນຳຂອງກອງເລຂາສົນທິສັນຍາໄຊເຕັດ (CITES) ຫຼັງຈາກທີ່ CITES ໄດ້ຕີກລີງຖອນຄຳແນະນຳໃຫ້ໂຈະການຄ້າຊະນິດພັນສັດປ່າກັບ ສປປ ລາວ.

ການເຂົ້າຮ່ວມຂອງພາກສ່ວນກ່ຽວຂ້ອງ

ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນໃນອາທິດຜ່ານມາ ທີ່ຫ້ອງປະຊຸມໃຫຍ່ກົມປ່າໄມ້ ໂດຍການເປັນປະທານຮ່ວມຂອງ ທ່ານ ຮສ. ປອ. ສົມຫວັງ ພົມມະວົງ ຫົວໜ້າກົມປ່າໄມ້, ຫົວໜ້າໜ່ວຍງານຄຸ້ມຄອງໄຊເຕັດຂອງ ສປປ ລາວ (CITES-MA) ແລະ ທ່ານ ສຈ. ປອ. ສີທອງ ທອງມະນີວົງ ຄະນະບໍດີຄະນະວິທະຍາສາດປ່າໄມ້, ຫົວໜ້າໜ່ວຍງານວິທະຍາສາດໄຊເຕັດ ຂອງ ສປປ ລາວ (CITES-SA)

. ນອກຈາກນີ້ ຍັງມີຜູ້ຕາງໜ້າຈາກມະຫາວິທະຍາໄລແຫ່ງຊາດ, ຊ່ຽວຊານຈາກ ສປ ຈີນ, ບໍລິສັດ LIT SOLUTION ລວມທັງຜູ້ຕາງໜ້າຈາກ 3 ຟາມທີ່ຂຶ້ນທະບຽນ (ບໍລິສັດ ວັນນະແສງ, ສຸກວັນນະແສງ ແລະ ເອເຊ) ເຂົ້າຮ່ວມ.

3 ເປົ້າໝາຍຫຼັກ ແລະ ລະບົບຕິດຕາມທີ່ທັນສະໄໝ

ກອງປະຊຸມໄດ້ສຸມໃສ່ 3 ຈຸດປະສົງສຳຄັນ ເພື່ອໃຫ້ການຄຸ້ມຄອງຟາມເພາະລ້ຽງລີງເປັນລະບົບດຽວກັນ ຄື:

ສ້າງຄວາມເຂົ້າໃຈທີ່ຖືກຕ້ອງ ກ່ຽວກັບຂໍ້ກຳນົດ ແລະ ຄູ່ມືວິຊາການໃນການສົ່ງອອກລີງຫາງຍາວ.

ນຳໃຊ້ກົນໄກຕິດຕາມທີ່ທັນສະໄໝ ເຊື່ອມໂຍງເລກປະຈຳຕົວລີງແຕ່ລະໂຕ ຕັ້ງແຕ່ແຫຼ່ງທີ່ມາ, ປະຫວັດພໍ່ແມ່ພັນ, ການເກີດ, ສຸຂະພາບ, ການເຄື່ອນຍ້າຍ ໄປຈົນເຖິງເອກະສານການສົ່ງອອກ.

ເຊື່ອມຕໍ່ຖານຂໍ້ມູນ ລະຫວ່າງບັນຊີຂອງຟາມ, ຈຳນວນລີງຕົວຈິງ ແລະ ຖານຂໍ້ມູນຂອງພາກລັດ ເພື່ອໃຫ້ສາມາດກວດສອບຍ້ອນກັບໄດ້ທຸກຂັ້ນຕອນຈົນເຖິງປາຍທາງ.

ເຂັ້ມງວດເລື່ອງແຫຼ່ງທີ່ມາ ແລະ ປົກປ້ອງສັດປ່າໃນທຳມະຊາດ

ໃນຕອນທ້າຍ ຄະນະປະທານໄດ້ເນັ້ນໜັກໃຫ້ທຸກພາກສ່ວນຮັບປະກັນແຫຼ່ງທີ່ມາທີ່ຖືກຕ້ອງຕາມກົດໝາຍ ໂດຍ ຫ້າມບໍ່ໃຫ້ນຳລີງທີ່ຈັບຈາກທຳມະຊາດ, ລີງທີ່ຖືກຍຶດ, ລູກຂອງລີງເຫຼົ່ານັ້ນ ຫຼື ລີງທີ່ບໍ່ສາມາດຢັ້ງຢືນແຫຼ່ງທີ່ມາໄດ້ ເຂົ້າໃນກຸ່ມສຳລັບການສົ່ງອອກເພື່ອການຄ້າຢ່າງເດັດຂາດ.

ພ້ອມກັນນີ້ ການກຳນົດໂກຕາສົ່ງອອກປະຈຳປີສຳລັບທັງ 3 ຟາມ ຈະຕ້ອງອີງໃສ່ຂໍ້ມູນທີ່ຜ່ານການກວດສອບຢ່າງລະອຽດ ໂດຍຕ້ອງກັນພໍ່ແມ່ພັນ ແລະ ລີງທົດແທນໄວ້ໃຫ້ພຽງພໍ ຄວບຄູ່ກັບການເບິ່ງແຍງສຸຂະພາບ ແລະ ສະຫວັດດີພາບສັດ ເພື່ອໃຫ້ການສົ່ງອອກຂອງ ສປປ ລາວ ມີຄວາມໂປ່ງໃສ ແລະ ຖືກຕ້ອງຕາມພັນທະສາກົນ.

ທີ່ມາ: ພະແນກ CITES ກົມປ່າໄມ້ / ຫ້ອງການກະຊວງກະສິກຳ ແລະ ສິ່ງແວດລ້ອມ

ຂ່າວພາຍໃນ · 13:25 ໂມງ · ອ່ານ 8 ຄັ້ງ

ລາວ-ໄທ ທົບທວນການຮ່ວມມື ດ້ານແຮງງານ ແລະ ການຈ້າງງານ ເພື່ອປຶກສາຫາລືຮ່ວມກັນ ແກ້ໄຂບັນຫາຂໍ້ຫຍຸ້ງຍາກທີ່ພົບພໍ້ ໃນການຈັດຕັ້ງປະຕິບັດວຽກງານຮ່ວມກັນ ໃນໄລຍະຜ່ານມາ



ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂອງ ສປປ ລາວ ຮ່ວມກັບ ກະຊວງແຮງງານ ແຫ່ງ ລາຊະອານາຈັກໄທ ຈັດກອງປະຊຸມລະດັບວິຊາການ ລາວ-ໄທ ໃນວັນທີ 25 ພະຈິກ 2026 ທີ່ນະຄອນຫລວງວຽງຈັນ, ເພື່ອປຶກສາຫາລືຮ່ວມກັນແກ້ໄຂບັນຫາຂໍ້ຫຍຸ້ງຍາກທີ່ພົບພໍ້ ໃນການຈັດຕັ້ງປະຕິບັດວຽກງານຮ່ວມກັນ ໃນໄລຍະຜ່ານມາ, ໂດຍມີ ທ່ານ ນາງ ອານຸສອນ ຄຳສິງສະຫວັດ ຫົວໜ້າກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ທ່ານ ສາມາດ ພັດຕະມະສຸດົນ ຫົວໜ້າກົມການຈັດຫາງານ ກະຊວງແຮງງານ ແຫ່ງລາຊະອານາຈັກໄທ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ ລາວ-ໄທ ເຂົ້າຮ່ວມ.

ໂອກາດນີ້, ທ່ານ ນາງ ອານຸສອນ ຄຳສິງສະຫວັດ ໃຫ້ຮູ້ວ່າ: ກອງປະຊຸມລະດັບວິຊາການ ລາວ-ໄທ ຄັ້ງນີ້ ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ເປັນການປະກອບສ່ວນໃນການຈັດຕັ້ງຜັນຂະຫຍາຍ ຜົນຂອງກອງປະຊຸມຖະແຫລງການຮ່ວມ ກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 23 ໃນລະຫວ່າງວັນທີ 1-2 ຕຸລາ 2026 ທີ່ແຂວງຫລວງພະບາງ ສປປ ລາວ, ທັງເປັນການທົບທວນການຮ່ວມມື ໃນການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານແຮງງານ ໃນປີ 2016 ແລະ ຂໍ້ຕົກລົງວ່າດ້ວຍການຈ້າງງານ ປີ 2017 ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຊຶ່ງຜ່ານການຈັດຕັ້ງປະຕິບັດການຮ່ວມມືດັ່ງກ່າວ, ເຫັນວ່າຜູ້ອອກແຮງງານລາວ ໄປເຮັດວຽກຢູ່ລາຊະອານາຈັກໄທ ຜ່ານລະບົບ MOU ນັບມື້ນັບເພີ່ມຂຶ້ນ. ສາຍເຫດຕົ້ນຕໍກໍ່ເນື່ອງມາຈາກ ລັດຖະບານໄທ ກໍຄື ກະຊວງແຮງງານ ແຫ່ງລາຊະອານາຈັກໄທ ໄດ້ໃຫ້ການສະໜັບສະໜຸນ ແລະ ໃຫ້ຄວາມສຳຄັນໃນການຮັບເອົາຜູ້ອອກແຮງງານຈາກ ສປປ ລາວ ຢ່າງດີ ໂດຍມີການປັບປຸງກົນໄກ, ຂັ້ນຕອນ, ຂະບວນການໃຫ້ມີຄວາມກະທັດຮັດ, ສະດວກ ແລະ ວ່ອງໄວ. ໂດຍລວມແລ້ວ, ເຫັນວ່າການຈັດຕັ້ງປະຕິບັດວຽກຮ່ວມມືດ້ານແຮງງານ

ຕໍ່ໜ້າ 7

ລາວ-ໄທ ທົບທວນການຮ່ວມມື ດ້ານແຮງງານ ແລະ ການຈ້າງງາ... (ຕໍ່ຈາກໜ້າ 6)

ລາວ-ໄທ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານແຮງງານ ໃນປີ 2016 ແລະ ຂໍ້ຕົກລົງວ່າດ້ວຍການຈ້າງງານ ປີ 2017 ໄດ້ມີຄວາມຄືບໜ້າ ແລະ ປະກອບສ່ວນຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງ ສອງປະເທດ ຢ່າງໃຫຍ່ຫລວງ.

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນທັງສອງຝ່າຍ ໄດ້ປຶກສາຫາລືໃນຫລາຍຫົວຂໍ້ສຳຄັນ ເພື່ອຮ່ວມກັນແກ້ໄຂບັນຫາ ຂໍ້ຫຍຸ້ງຍາກທີ່ພົບພໍ້ ໃນໄລຍະຜ່ານມາ ໃຫ້ມີຄວາມຊັດເຈນ ແລະ ໄດ້ຮັບການແກ້ໄຂຢ່າງເປັນຮູບປະທຳ ເປັນຕົ້ນ ໄດ້ປຶກສາຫາລື ກ່ຽວກັບການສ້າງ ແລະ ປັບປຸງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ, ຮ່າງຂໍ້ຕົກລົງ ວ່າດ້ວຍການຈ້າງແຮງງານ ລາວ-ໄທ ສະບັບປັບປຸງ, ນະໂຍບາຍແກ່ຜູ້ອອກແຮງງານ ທີ່ມີວາລະເຮັດວຽກຄົບ 4 ປີ ເພື່ອກັບຄືນເຂົ້າເຮັດວຽກ ໂດຍບໍ່ຕ້ອງລໍຖ້າ ເຖິງ 30 ວັນ, ການຈັດງານບັດພົບແຮງງານ ສຳລັບຜູ້ອອກແຮງງານລາວ ເພື່ອສົ່ງເສີມການຮ່ວມມື ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກໄທ, ການອຳນວຍຄວາມສະດວກ ໃຫ້ແກ່ຜູ້ອອກແຮງງານຢູ່ສູນແຮກຮັບ ແຂວງໝອງຄາຍ, ການຂຶ້ນທະບຽນຜູ້ອອກແຮງງານລາວ ທີ່ຜິດກົດໝາຍ, ລວມເຖິງການຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານລາວ ໄດ້ສົ່ງເງິນກັບຄືນປະເທດ ໂດຍຜ່ານລະບົບທະນາຄານ.

ຂ່າວ-ພາບ: ທະນູທອງ

◆ ຂ່າວພາຍໃນ · 11:14 ໂມງ · ອ່ານ 6 ຄັ້ງ

ອັດຕະປື – ບໍລິຄຳໄຊ ຮ່ວມແລກປ່ຽນບົດຮຽນ ວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດ ແລະ ວຽກງານ 3 ສ້າງ



ແຂວງອັດຕະປື ແລະ ແຂວງບໍລິຄຳໄຊ ໄດ້ຈັດກອງປະຊຸມພົບປະແລກປ່ຽນ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ ຂຶ້ນໃນວັນທີ 24 ພະຈິກ 2026 ທີ່ ແຂວງອັດຕະປື ເພື່ອຍົກລະດັບປະສິດທິພາບໃນການຈັດຕັ້ງປະຕິບັດວຽກງານໃນທ້ອງຖິ່ນໃຫ້ເກີດຜົນເປັນຮູບປະທຳ.

ບັນຍາກາດກອງປະຊຸມ ແລະ ການນຳສະເໜີບົດຮຽນ

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ນາງ ມິນາພອນ ໄຊສົມພູ ຮອງເລຂາພັກແຂວງອັດຕະປື ແລະ ທ່ານ ເລື່ອນວິໄລ ຈັນທະລາພັນ ຮອງເລຂາພັກແຂວງບໍລິຄຳໄຊ ໂດຍມີຄະນະຜູ້ແທນຈາກທັງສອງແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດກ່າວເປີດກອງປະຊຸມ ທ່ານ ນາງ ມິນາພອນ ໄຊສົມພູ ໄດ້ເນັ້ນໜັກວ່າ ການພົບປະຄັ້ງນີ້ເປັນໂອກາດອັນດີໃນການຖອດຖອນບົດຮຽນຈາກພາກປະຕິບັດຕົວຈິງ ແລກປ່ຽນວິທີການເຮັດວຽກ ແລະ ຮ່ວມກັນຊອກຫາແນວທາງແກ້ໄຂສິ່ງທ້າທາຍຕ່າງໆ ໃນວຽກງານກໍ່ສ້າງຮາກຖານການເມືອງ, ການແກ້ໄຂຄວາມທຸກຍາກ, ວຽກງານ 3 ສ້າງ ລວມທັງວຽກງານຂັ້ນຕາແສງ.

ຈາກນັ້ນ ທັງສອງຝ່າຍໄດ້ຜັດປ່ຽນກັນລາຍງານຜົນງານທີ່ພົ້ນເດັ່ນ ຄື:

ຝ່າຍແຂວງອັດຕະປື: ນຳສະເໜີໂດຍ ທ່ານ ວິທະຍາ ພົມມະຈັນ ຮອງຫົວໜ້າຫ້ອງວ່າການແຂວງອັດຕະປື ກ່ຽວກັບຜົນສຳເລັດດ້ານການກໍ່ສ້າງຮາກຖານການເມືອງ, ການພັດທະນາຊົນນະບົດ ແລະ ການຂັບເຄື່ອນວຽກງານຂັ້ນຕາແສງ.

ຝ່າຍແຂວງບໍລິຄຳໄຊ: ນຳສະເໜີໂດຍ ທ່ານ ພອນສະຫວັນ ວິໄສວັນທອງ ຮອງຫົວໜ້າຫ້ອງວ່າການແຂວງບໍລິຄຳໄຊ ກ່ຽວກັບບົດຮຽນ ແລະ ຈຸດເດັ່ນໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ.

ຫຼັງຈາກການລາຍງານ ຜູ້ແທນທັງສອງແຂວງໄດ້ຮ່ວມກັນປະກອບຄຳເຫັນ, ຕັ້ງຄຳຖາມ ແລະ ແລກປ່ຽນປະສົບການຢ່າງກົງໄປກົງມາ ເພື່ອນຳໄປປັບປຸງວຽກງານໃຫ້ມີປະສິດທິຜົນສູງຂຶ້ນ.

ລົງຢ້ຽມຢາມພື້ນທີ່ຕົວຈິງ ແລະ ກົດຈະກຳສ້າງຄວາມສາມັກຄີ

ນອກຈາກກອງປະຊຸມແລ້ວ ຄະນະຜູ້ແທນທັງສອງແຂວງຍັງໄດ້ລົງຢ້ຽມຢາມ ແລະ ຖອດຖອນບົດຮຽນຕົວຈິງຢູ່ຫຼາຍຈຸດສຳຄັນ ປະກອບມີ:

ດ້ານການບໍລິຫານ ແລະ ການຜະລິດ: ຢ້ຽມຢາມການຈັດຕັ້ງວຽກງານຂັ້ນຕາແສງ ຢູ່ຕາແສງເຊກອງ ເມືອງສາມັກຄີໄຊ; ຢ້ຽມຊົມຄອບຄົວຕົວແບບດ້ານການປຸກຝັງ-ລ້ຽງສັດ ຢູ່ບ້ານຫາດຊາຍຂາວ ເມືອງໄຊເສດຖາ ແລະ ຢ້ຽມຊົມຟາມລ້ຽງງົວຂອງບໍລິສັດທາໂກ ຢູ່ບ້ານຫາດຊັນ.

ດ້ານວັດທະນະທຳ ແລະ ກິລາ: ຢ້ຽມຊົມອະນຸສາວະລີເຈົ້າໄຊຍະເສດຖາທິລາດ ແລະ ຫໍຫຼັກເມືອງ ພ້ອມທັງຮ່ວມກົດຈະກຳແຂ່ງຂັນເຕະບານມິດຕະພາບ ເພື່ອຮັດແໜ້ນຄວາມສາມັກຄີ ແລະ ສາຍພົວພັນຮ່ວມມືລະຫວ່າງສອງແຂວງໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

ກ້າວຕໍ່ໄປຂອງການຮ່ວມມື

ການພົບປະແລກປ່ຽນໃນຄັ້ງນີ້ ຖືເປັນຂີດໝາຍສຳຄັນໃນການເສີມສ້າງຄວາມຮ່ວມມື ແລະ ເປີດໂອກາດໃຫ້ທັງສອງແຂວງໄດ້ນຳເອົາບົດຮຽນອັນລ້ຳຄ່າໄປໝູນໃຊ້ເຂົ້າໃນການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຂັບເຄື່ອນວຽກງານ 3 ສ້າງ ໃຫ້ບັນລຸເປົ້າໝາຍທີ່ວາງໄວ້.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

◆ ຂ່າວພາຍໃນ · 13:57 ໂມງ · ອ່ານ 5 ຄັ້ງ

ກຽມສັງລວມຂໍ້ມູນເພື່ອສົ່ງເສີມການສຶກສາຮຽນຮ່ວມຂອງນັກຮຽນພິການ



ການເຂົ້າໃຈສິ່ງທີ່ເກີດຂຶ້ນໃນຫ້ອງຮຽນຕົວຈິງ ແມ່ນມີຄວາມສຳຄັນສຳລັບການປັບປຸງການສຶກສາສຳລັບເດັກພິການ ຊຶ່ງຄູສາມາດໃຊ້ວິທີການທີ່ແຕກຕ່າງກັນ ເພື່ອຊ່ວຍໃຫ້ນັກຮຽນມີສ່ວນຮ່ວມໃນບົດຮຽນ. ປະສົບການໃນຫ້ອງຮຽນຈະແຕກຕ່າງກັນຫຼາຍ ສຳລັບນັກຮຽນທີ່ມີຄວາມຫຍຸ້ງຍາກໃນດ້ານການເບິ່ງເຫັນ, ການໄດ້ຍິນ, ການສື່ສານ, ການເຄື່ອນໄຫວ ຫຼື ດ້ານການຮຽນຮູ້. ການເຂົ້າໃຈປະສົບການເຫຼົ່ານີ້ ຈະຊ່ວຍໃຫ້ຄູ ແລະ ຜູ້ເຮັດວຽກສຶກສານິເທດ ເຂົ້າໃຈຕໍ່ຄວາມຕ້ອງການຂອງນັກຮຽນ ເພື່ອໃຫ້ນັກຮຽນທຸກຄົນສາມາດຮຽນຮູ້ຮ່ວມກັນໄດ້.

ທ່ານ ລຳພູນ ຫຼວງໄຊ ຫົວໜ້າກົມພັດທະນາຄູ ແລະ ການບໍລິຫານການສຶກສາ ໄດ້ກ່າວວ່າ: ກະຊວງສຶກສາທິການ ແລະ ກີລາ ຕ້ອງການສຶກສາຄົ້ນຄວ້າ ແລະ ສຶກສາຫຼັກຖານທີ່ສະທ້ອນເຖິງຄວາມເປັນຈິງຂອງໂຮງຮຽນ ແລະ ປະສົບການຂອງນັກຮຽນ. ໂດຍການສຶກສາການປະຕິບັດການສອນໃນຫ້ອງຮຽນ ແລະ ການຟັງຄຳເຫັນ

ຈາກນັກຮຽນໂດຍກົງ, ພວກເຮົາຈະສາມາດລະບຸການສະໜັບສະໜູນທີ່ເປັນປະໂຫຍດທີ່ສຸດ ແລະ ເລືອກວິທີການສົ່ງເສີມການສອນຂອງຄູ. ໃນລະຫວ່າງການລົງສັງເກດການຂັ້ນທ້ອງຖິ່ນ, ທີມງານຄົ້ນຄວ້າ ກຳລັງສັງເກດວິທີທີ່ຄູຈັດກິດຈະກຳ ແລະ ຊ່ວຍເຫຼືອນັກຮຽນພິການໃນລະຫວ່າງການຮຽນ. ທີມງານສຶກສາຄົ້ນຄວ້າຈະສັງເກດວິທີທີ່ຄູດັດປັບກິດຈະກຳ, ໃຫ້ການສະໜັບສະໜູນເພີ່ມຕື່ມ ແລະ ການມີສ່ວນຮ່ວມຂອງນັກຮຽນໃນການຮຽນໃນຫ້ອງຮຽນ. ພ້ອມທັງຈະສັງເກດເບິ່ງວິທີທີ່ນັກຮຽນປະຕິບັດຕາມຄຳແນະນຳ, ສື່ສານ, ເຮັດວຽກບ້ານໃຫ້ສຳເລັດ, ເຮັດກິດຈະກຳຮ່ວມກັບເພື່ອນຮ່ວມຫ້ອງ ແລະ ເຂົ້າຮ່ວມກິດຈະກຳໃນຫ້ອງຮຽນ.

ທ່ານ ໄມໂຄ ຄາຣີ ເລຂາເອກສະຖານທູດອົດສະຕຣາລີ ກ່າວວ່າ: ການສະໜັບສະໜູນການສຶກສາຮຽນຮ່ວມຕ້ອງການຫຼາຍກວ່າການສ້າງຄຳແນະນຳ ຊຶ່ງຄູຕ້ອງການເຄື່ອງມືທີ່ເຂົາເຈົ້າສາມາດເຂົ້າໃຈ ແລະ ນຳໃຊ້ໄດ້ ແລະ ນັກຮຽນຄວນມີສ່ວນຮ່ວມໃນການຕັດສິນໃຈກ່ຽວກັບການສຶກສາຂອງເຂົາເຈົ້າ. ລັດຖະບານອົດສະຕຣາລີ ມີຄວາມຍິນດີທີ່ຈະສະໜັບສະໜູນກະຊວງສຶກສາທິການ ແລະ ກີລາ ໃນການເກັບກຳຫຼັກຖານການປະຕິບັດຕົວຈິງ ທີ່ສາມາດປະກອບສ່ວນເຂົ້າໃນການສິດສອນທີ່ເຂັ້ມແຂງຂຶ້ນ ແລະ ການສະໜັບສະໜູນທີ່ດີຂຶ້ນສຳລັບນັກຮຽນທີ່ມີຄວາມພິການ.

ຫຼັງຈາກວຽກງານການລົງຕິດຕາມຄັ້ງນີ້, ທີມງານສຶກສາຄົ້ນຄວ້າ ຈະສືບຕໍ່ເກັບກຳ ແລະ ວິເຄາະຂໍ້ມູນໃນລະຫວ່າງສົກຮຽນ 2026-2027 ຊຶ່ງການລົງຢ້ຽມຢາມໂຮງຮຽນໃນຄັ້ງຕໍ່ໄປ ຈະຊ່ວຍທົບທວນວິທີການນຳໃຊ້ເອກະສານ ແລະ ກຳນົດສິ່ງທີ່ຄວນປັບປຸງ ຫຼື ການສະໜັບສະໜູນເພີ່ມຕື່ມທີ່ຄູອາຈານຕ້ອງການ. ຜົນການສຶກສາຄົ້ນຄວ້າ ຄາດວ່າຈະໃຫ້ສຳເລັດໄດ້ພາຍໃນກາງປີ 2027. ຫຼັງຈາກນັ້ນ, ກະຊວງສຶກສາທິການ ແລະ ກີລາ ຮ່ວມກັບລັດຖະບານອົດສະຕຣາລີ ຈະນຳໃຊ້ຫຼັກຖານເພື່ອປັບປຸງສື່ການຮຽນ-ການສອນ ແລະ ສ້າງກິດຈະກຳທີ່ສົ່ງເສີມການສຶກສາຮຽນຮ່ວມໃນອະນາຄົດ. ໂດຍການລວມເອົາການສັງເກດການສອນໃນຫ້ອງຮຽນ ແລະ ຄຳເຫັນຂອງນັກຮຽນ, ການສຶກສາຄົ້ນຄວ້າ ຈະຊ່ວຍກຳນົດວິທີການປະຕິບັດຕົວຈິງ ເພື່ອສະໜັບສະໜູນນັກຮຽນພິການໃນ ສປປ ລາວ ໃຫ້ມີສ່ວນຮ່ວມ ແລະ ຮຽນຮູ້ໄດ້ດີຂຶ້ນ ເພື່ອໃຫ້ເຂົາເຈົ້າສາມາດປະກອບສ່ວນເຂົ້າໃນການພັດທະນາສັງຄົມ, ເສດຖະກິດ, ຊັບພະຍາກອນມະນຸດ ແລະ ອະນາຄົດຂອງປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງຍິ່ງຂຶ້ນ.

ເສດຖະກິດ-ສັງຄົມ

◆ ເສດຖະກິດ-ສັງຄົມ · 10:36 ໂມງ · ອ່ານ 5 ຄັ້ງ

ສົ່ງເສີມການສຶກສາ! ຄອບຄົວແມ່ເຖົ້າ ພູທອນ ພູມສະຫວັນ ແລະ ບໍລິສັດ MCS Mining ມອບທຶນ 4.5 ຕື້ກີບ ສ້າງໂຮງຮຽນມັດທະຍົມຢູ່ແຂວງຄຳມ່ວນ



ຄອບຄົວແມ່ເຖົ້າ ພູທອນ ພູມສະຫວັນ ພ້ອມດ້ວຍບໍລິສັດ ເອັມຊີເອັສ ມາຍນິງ ອິນດັສທຣີລາວ ຈຳກັດ (MCS Mining Industry Laos) ໄດ້ຮ່ວມກັນມອບທຶນສະໜັບສະໜູນມູນຄ່າ 4.5 ຕື້ກີບ ເພື່ອກໍ່ສ້າງໂຮງຮຽນມັດທະຍົມຕອນຕົ້ນ ໜອງປົງ ທີ່ບ້ານໜອງປົງ ເມືອງບົວລະພາ ແຂວງຄຳມ່ວນ ແນໃສ່ຍົກລະດັບ ແລະ ສ້າງໂອກາດທາງການສຶກສາໃຫ້ແກ່ເຍົາວະຊົນໃນທ້ອງຖິ່ນ.

ພິທີລົງນາມສັນຍາກໍ່ສ້າງ

ເມື່ອວັນທີ 18 ພະຈິກ 2026 ທີ່ຜ່ານມາ ໄດ້ມີພິທີລົງນາມສັນຍາຮັບເໝົາກໍ່ສ້າງໂຄງການດັ່ງກ່າວລະຫວ່າງຝ່າຍຜູ້ໃຫ້ທຶນ ແລະ ບໍລິສັດ ມີຊັບນິລັນ ກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ ຈຳກັດ ເຊິ່ງເປັນຜູ້ຮັບເໝົາກໍ່ສ້າງ. ໂດຍພິທີດັ່ງກ່າວໄດ້ຮັບກຽດເຂົ້າຮ່ວມເປັນສັກຂີພິຍານຂອງ ທ່ານ ນາງ ສຸກຂະເສີມ ສິດທິເດດ ຫົວໜ້າພະແນກສຶກສາທິການ ແລະ ກີລາ ແຂວງຄຳມ່ວນ ພ້ອມດ້ວຍບັນດາພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ລາຍລະອຽດຂອງໂຄງການກໍ່ສ້າງ

ສຳລັບໂຄງການກໍ່ສ້າງໂຮງຮຽນມັດທະຍົມຕອນຕົ້ນ ໜອງປົງ ປະກອບມີລາຍລະອຽດສຳຄັນດັ່ງນີ້:

ຮູບແບບອາຄານ: ອາຄານຮຽນ 1 ຊັ້ນ ຈຳນວນ 7 ຫ້ອງຮຽນ

ຂະໜາດ: ກວ້າງ 9 ແມັດ x ຍາວ 56 ແມັດ

ມູນຄ່າການກໍ່ສ້າງ: 4.5 ຕື້ກີບ

ກຳນົດການສຳເລັດ: ຄາດວ່າຈະດຳເນີນການກໍ່ສ້າງໃຫ້ສຳເລັດສົມບູນໃນເດືອນພຶດສະພາ 2027.

ວາງຮາກຖານອະນາຄົດໃຫ້ຊຸມຊົນ

ການປະກອບສ່ວນທຶນຮອນໃນຄັ້ງນີ້ ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນ ແລະ ນ້ຳໃຈຂອງພາກທຸລະກິດ ແລະ ຄອບຄົວຜູ້ໃຈບຸນ ໃນການຮ່ວມມືກັບພາກລັດເພື່ອພັດທະນາສັງຄົມ ໂດຍສະເພາະແມ່ນການຂະຫຍາຍໂອກາດທາງການສຶກສາໃຫ້ແກ່ລູກຫຼານໃນເຂດຫ່າງໄກ ໃຫ້ມີສະຖານທີ່ຮ່ຳຮຽນທີ່ໄດ້ມາດຕະຖານ ແລະ ເປັນການວາງຮາກຖານທີ່ໝັ້ນຄົງໃຫ້ແກ່ການພັດທະນາຊັບພະຍາກອນມະນຸດຂອງຊຸມຊົນໃນອະນາຄົດ.

ທີ່ມາ: MCS Mining Industry Lao Co.,Ltd.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 14:22 ໂມງ · ອ່ານ 2 ຄັ້ງ

ສະຫວັນນະເຂດ ດຳເນີນກອງປະຊຸມສະໄຫມສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ V



ທ່ານ ບຸນໂຈມ ອຸບົນປະເສີດ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ຈັດ ຂຶ້ນໃນບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນພາຍໃນ ແຂວງ ພວມສຸມໃສ່ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງ ແລະ ຜົນສຳເລັດຂອງກອງປະຊຸມ ສະໄໝສາມັນ ເທື່ອທີ 2 ຂອງສະພາ ແຫ່ງຊາດ ຊຸດທີ X. ຕະຫລອດ 5 ວັນ ຂອງການດຳເນີນກອງປະຊຸມ (24-28 ພະຈິກ 2026), ຜູ້ແທນ ກອງປະຊຸມຈະພ້ອມກັນຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາ 10 ເນື້ອໃນຫລັກ ທີ່ເປັນຫົວໃຈຂອງ ການບໍລິຫານ ແລະ ການພັດທະນາ ແຂວງ ໃນນີ້, ຈະໄດ້ ພິຈາລະນາບົດ ລາຍງານການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງ ລັດຂອງ ແຂວງ ໄລຍະ 10 ເດືອນ ຜ່ານມາ ແລະ ຄາດຄະເນໝົດປີ 2026; ພິຈາລະນາ, ຮັບຮອງເອົາບົດ ລາຍ ງານການຈັດຕັ້ງປະຕິບັດອາລະ ແຫ່ງຊາດ ວ່າດ້ວຍ ການພັດທະ ນາຊົນນະບົດ ແລະ ແກ້ໄຂ ຄວາມທຸກ ຍາກພາຍໃນແຂວງ; ພິຈາລະນາ, ຮັບຮອງການໂຮມກົງຈັກ ຫ້ອງການ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ ເຂົ້າ ກັບຄະນະ ຄຸ້ມຄອງເຂດເສດຖະກິດ ແຂວງສະຫວັນ ນະເຂດ ແລະ ພິຈາ ລະນາ, ຮັບຮອງການ ສະເໜີແຕ່ງ ຕັ້ງບຸກຄະລາກອນຂອງສະພາ ປະຊາຊົນແຂວງ.

ພ້ອມນີ້, ໃນກອງປະຊຸມຍັງຈະ ພິຈາລະນາ, ຮັບຮອງເອົາບົດ ລາຍງານ ວຽກງານປະຈຳປີ 2026 ແລະ ທິດທາງ ແຜນການປະຈຳປີ 2027 ຂອງອົງການ ກວດສອບ ປະຈຳພາກກາງ 2 (ພ້ອມທັງ ຜົນ ການກວດສອບບົດສະຫລຸບຂາດ ຕົວ ການຈັດຕັ້ງປະຕິບັດແຜນງົບ ປະມານແຫ່ງ ລັດຂອງແຂວງ ປະ ຈຳປີ 2025), ອົງການກວດກາ ລັດແຂວງ, ອົງການໄອ ຍະການປະ ຊາຊົນແຂວງ, ສານປະຊາຊົນ ແຂວງ ແລະ ສະພາປະຊາຊົນແຂວງ. ພ້ອມກັນນີ້, ຈະພິຈາລະນາມະຕິ ຮັບຮອງ ການສ້າງ ແລະ ປັບປຸງນິຕິ ກຳໃຕ້ກົດໝາຍ 3 ສະບັບ ຄື: ສ້າງ ໃໝ່ 1 ສະບັບ ກ່ຽວກັບຂໍ້ຕົກລົງ ວ່າດ້ວຍກອງທຶນ ພັດທະນາກິລາ- ກາຍະກຳຂອງແຂວງ ສະຫວັນນະ ເຂດ ແລະ ປັບປຸງ 2 ສະບັບ ກ່ຽວກັບ ຂໍ້ຕົກລົງການກຳນົດເຂດປະເມີນ ລາຄາທີ່ດິນ-ສິ່ງປຸກສ້າງພາຍໃນ ແຂວງ ແລະ ຂໍ້ຕົກລົງການຄຸ້ມຄອງ ຂີ້ເຫຍື້ອ. ຂ່າວ-ພາບ: ອັກສອນສິນ ພິມມະຈັນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ **ເຕັກໂນໂລຊີ** · 15:12 ໂມງ · ອ່ານ 12 ຄັ້ງ

ສັ່ນສະເທືອນວົງການໄຊເບີ! ການໄຟຟ้າເກົາຫຼີໃຕ้ (KEPCO) ຖືກແຮັກຄັ້ງໃຫຍ່ ຂໍ້ມູນສ່ວນບຸກຄົນຫຼຸດກວ່າ 1.52 ລ້ານຄົນ



ເກີດເຫດການໂຈມຕີທາງໄຊເບີຄັ້ງໃຫຍ່ຕໍ່ ບໍລິສັດ ການໄຟຟ้າເກົາຫຼີ (KEPCO) ເຊິ່ງເປັນລັດວິສາຫະກິດພະລັງງານຫຼັກຂອງປະເທດ ສົ່ງຜົນໃຫ້ຂໍ້ມູນສຳຄັນຂອງລູກຄ້າ ພະນັກງານ ແລະ ບໍລິສັດຄູ່ຄ້າ ຮົ່ວໄຫຼອອກໄປລວມທັງໝົດປະມານ 1.52 ລ້ານຄົນ ສ້າງຄວາມກັງວົນຢ່າງໜັກຕໍ່ຄວາມປອດໄພທາງດິຈິຕອນ ແລະ ຄວາມສ່ຽງຈາກກຸ່ມມິດສາຊີບ.

ເຈາະເລິກຂໍ້ມູນທີ່ຖືກແຮັກ: ມີຫຍັງຫຼຸດອອກໄປແດ່?

ການໂຈມຕີຄັ້ງນີ້ໄດ້ເຈາะເຂົ້າສູ່ 2 ລະບົບຫຼັກຂອງ KEPCO ໂດຍແບ່ງອອກເປັນ:

ລະບົບບໍລິການລູກຄ້າ (KEPCO ON): ຂໍ້ມູນລູກຄ້າຮົ່ວໄຫຼ 650,487 ຄົນ ເຊິ່ງລວມມີຂໍ້ມູນທີ່ລະອຽດອ່ອນ ເຊັ່ນ: ຊື່-ນາມສະກຸນ, ເລກບັດປະຈຳຕົວ, ເບີໂທລະສັບ, ເລກບັນຊີທະນາຄານ ແລະ ເລກບັດເຄຣດິດ.

ລະບົບຈັດຊື້-ຈັດຈ້າງ ອີເລັກໂທຣນິກ (SRM): ຂໍ້ມູນຜູ້ຕາງໜ້າ ບໍລິສັດຄູ່ຄ້າຫຼຸດ 426,827 ຄົນ ແລະ ຂໍ້ມູນພະນັກງານພາຍໃນລວມເຖິງຜູ້ກ່ຽວຂ້ອງຫຼຸດອີກ 442,934 ຄົນ.

ເບື້ອງຫຼັງເຫດການ ແລະ ການຮັບມືລ່າສຸດ

ເຫດການດັ່ງກ່າວເລີ່ມເປັນທີ່ຮັບຮູ້ໃນວັນທີ 19 ພະຈິກ 2026 ຫຼັງຈາກກຸ່ມແຮັກເກີທີ່ໃຊ້ຊື່ວ່າ "Noiem" ໄດ້ສົ່ງອີເມວຂົ່ມຂູ່ ແລະ ໂພສປະກາດຂາຍຂໍ້ມູນເທິງເວັບມືດ (Dark Web). ຕໍ່ມາໃນວັນທີ 20 ພະຈິກ KEPCO ໄດ້ກວດສອບໄຟລ์ຕົວຢ່າງ ແລະ ຢືນຢັນວ່າເປັນຂໍ້ມູນແທ້ ຈຶ່ງຮີບປິດກັ້ນການເຂົ້າເຖິງຈາກພາຍນອກ ແລະ ລະງັບລະບົບທີ່ໄດ້ຮັບຜົນກະທົບທັນທີ.

ລ່າສຸດ ທ່ານ ຄິມ ດົງ-ຊອບ ປະທານ KEPCO ໄດ້ອອກຖະແຫຼງການຂໍໂທດປະຊາຊົນຢ່າງເປັນທາງການ ພ້ອມທັງປະກາດມາດຕະການຊ່ວຍເຫຼືອ 3 ຂັ້ນຕອນ ໂດຍການມອບສິດທິບໍລິການປ້ອງກັນການປອມແປງຂໍ້ມູນສິນເຊື່ອຟຣີ 1 ປີ ພ້ອມປະກັນໄພຊົດເຊີຍຄວາມເສຍຫາຍຈາກໄພໄຊເບີສູງສຸດ 10 ລ້ານວອນໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບ. ຂະນະດຽວກັນ ຄະນະກຳມະການຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງເກົາຫຼີໃຕ้ (PIPC) ກໍໄດ້ເປີດການສືບສວນຢ່າງເຂັ້ມງວດເພື່ອຫາສາເຫດ ແລະ ພິຈາລະນາປົດລົງໂທດ.

ແຫຼ່ງທີ່ມາ: BleepingComputer

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

◆ ສາລະໜ້າຮູ້ · 14:27 ໂມງ · ອ່ານ 12 ຄັ້ງ

ຮູ້ໄວ້ກ່ອນສາຍເກີນແກ້! ຮູ້ທັນສາເຫດໄຟຟ້າລັດວົງຈອນ ແລະ ອັກຄີໄພ ພ້ອມວິທີປ້ອງກັນ ຫຼຸດຄວາມສ່ຽງໄຟໄໝ້ເຮືອນ



ໄຟຟ້າເປັນສິ່ງຈຳເປັນຕໍ່ການດຳລົງຊີວິດ ແຕ່ຖ້າຫາກນຳໃຊ້ບໍ່ຖືກວິທີ ຫຼື ລະບົບໄຟຟ້າບໍ່ໄດ້ມາດຕະຖານ ກໍອາດກາຍເປັນສາເຫດສຳຄັນທີ່ນຳໄປສູ່ໄຟຟ້າລັດວົງຈອນ, ໄຟໄໝ້ ແລະ ອັກຄີໄພ ເຊິ່ງສາມາດສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ.

ສາເຫດສຳຄັນທີ່ພາໃຫ້ໄຟຟ້າລັດວົງຈອນ ແລະ ເກີດອັກຄີໄພ

1. ການຊົມໃຊ້ໄຟຟ້າເພີ່ມຂຶ້ນ ແຕ່ບໍ່ມີການປັບປຸງລະບົບໄຟຟ້າໃຫ້ຮອງຮັບ

ການນຳໃຊ້ເຄື່ອງໃຊ້ໄຟຟ້າຫຼາຍຊະນິດພ້ອມກັນ ໂດຍບໍ່ຄຳນຶງເຖິງກຳລັງຮອງຮັບຂອງສາຍໄຟ ແລະ ອຸປະກອນໄຟຟ້າ ອາດເຮັດໃຫ້ເກີດການໃຊ້ໄຟເກີນກຳລັງ (Overload) ຈົນສາຍໄຟຮ້ອນຈັດ ແລະ ສ່ຽງຕໍ່ການເກີດໄຟໄໝ້.

2. ການນຳໃຊ້ໄຟຟ້າບໍ່ຖືກຫຼັກເຕັກນິກ

ການຕໍ່ສາຍໄຟບໍ່ຖືກວິທີ, ການໃຊ້ປັກສຽບຫຼາຍອັນເກີນກຳລັງ, ການໃຊ້ສາຍຕໍ່ທີ່ບໍ່ໄດ້ມາດຕະຖານ ຫຼື ການສ້ອມແປງລະບົບໄຟຟ້າໂດຍຜູ້ທີ່ບໍ່ມີຄວາມຊຳນານລ້ວນເປັນປັດໃຈສ່ຽງທີ່ອາດກໍ່ໃຫ້ເກີດໄຟຟ້າລັດວົງຈອນ.

3. ລະບົບໄຟຟ້າເກົ່າ ແລະ ອຸປະກອນບໍ່ໄດ້ມາດຕະຖານ

ລະບົບໄຟຟ້າທີ່ຕິດຕັ້ງມາດົນນານ ຂາດການກວດກາ ແລະ ບຳລຸງຮັກສາ ລວມເຖິງການນຳໃຊ້ສະວິດ, ເບຣກເກີ, ປັກສຽບ ແລະ ເຄື່ອງໃຊ້ໄຟຟ້າທີ່ບໍ່ໄດ້ມາດຕະຖານ ອາດເຮັດໃຫ້ເກີດຄວາມຮ້ອນສະສົມ ແລະ ເກີດປະກາຍໄຟ.

4. ສາຍໄຟເກົ່າ, ສາຍໄຟຊຳຊຸດ ແລະ ຂາດອຸປະກອນປ້ອງກັນ

ສາຍໄຟທີ່ມີສະພາບເກົ່າ, ສະນວນຫຸ້ມສາຍແຕກ, ສາຍໄຟຖືກກັດແທະ ຫຼື ມີການຕິດຕັ້ງລະບົບໄຟຟ້າທີ່ບໍ່ມີອຸປະກອນຕັດໄຟອັດຕະໂນມັດ ອາດເປັນສາເຫດໃຫ້ເກີດໄຟຟ້າຮົ່ວ, ລັດວົງຈອນ ແລະ ອັກຄີໄພ.

ມາດຕະການແກ້ໄຂ ແລະ ວິທີປ້ອງກັນ

1. ການຟ້າລາວ (ຟຟລ) ກວດກາ ແລະ ບຳລຸງຮັກສາລະບົບຈຳໜ່າຍໄຟຟ້າເປັນປົກກະຕິ ເພື່ອກວດຫາຈຸດບົກພ່ອງ ແລະ ແກ້ໄຂບັນຫາກ່ອນເກີດເຫດ.

2. ພັດທະນາ ແລະ ປັບປຸງລະບົບໄຟຟ້າໃຫ້ທັນສະໄໝ ພ້ອມທັງນຳໃຊ້ສາຍໄຟ ແລະ ອຸປະກອນທີ່ມີຄຸນນະພາບໄດ້ມາດຕະຖານ ແລະ ເໝາະສົມກັບກຳລັງໄຟຟ້າທີ່ນຳໃຊ້.

3. ປະຊາຊົນຕ້ອງລະມັດລະວັງ ເມື່ອເກີດໄຟໄໝ້ ຫຼື ໄຟຟ້າຂັດຂ້ອງ ຫ້າມເຂົ້າໃກ້ສາຍໄຟທີ່ຂາດ, ເສົາໄຟທີ່ເສຍຫາຍ ຫຼື ຈຸດທີ່ມີປະກາຍໄຟ ແລະ ຄວນແຈ້ງໜ່ວຍງານທີ່ກ່ຽວຂ້ອງທັນທີ.

4. ຜູ້ຊົມໃຊ້ໄຟຟ້າຄວນມີສະຕິ ແລະ ໃຊ້ໄຟຟ້າຢ່າງຖືກວິທີ ບໍ່ໃຊ້ປັກສຽບເກີນກຳລັງ, ກວດກາສາຍໄຟເປັນປະຈຳ ແລະ ຕິດຕັ້ງເບຣກເກີປ້ອງກັນກະແສໄຟເກີນ ແລະ ໄຟຮົ່ວໃຫ້ເໝາະສົມ.

ຄຳເຕືອນສຳຄັນ!

ຫາກພົບເຫັນກິ່ນໄໝ້, ສຽງແຕກຈາກປັກສຽບ, ສະວິດຮ້ອນຜິດປົກກະຕິ ຫຼື ມີປະກາຍໄຟ ຄວນຕັດໄຟຈາກຈຸດທີ່ປອດໄພ ແລະ ໃຫ້ຊ່າງໄຟຟ້າທີ່ມີຄວາມຊຳນານເຂົ້າກວດກາ. ຫ້າມໃຊ້ນ້ຳດັບໄຟທີ່ກຳລັງໄໝ້ອຸປະກອນໄຟຟ້າທີ່ຍັງມີກະແສໄຟ.

ການໃຊ້ໄຟຟ້າຢ່າງປອດໄພ ເລີ່ມຕົ້ນຈາກຄວາມຮັບຜິດຊອບຂອງທຸກຄົນ. ປ້ອງກັນກ່ອນເກີດເຫດ ດີກວ່າແກ້ໄຂຫຼັງເກີດໄຟໄໝ້ກໍບໍ່ທັນແລ້ວ!

ອ້າງອີງ: EDL LAOS

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 09:37 ໂມງ · ອ່ານ 15 ຄັ້ງ

ນາທີລະຫຶກ! ຕຳຫຼວດໄທສົນທິກຳລັງບຸກຊ່ວຍເຫຼືອ 2 ສາວຊາວຈີນ ຖືກລັກພາຕົວ ຮຽກຄ່າໄຖ່ກາງເມືອງພັດທະຍາ ມູນຄ່າກວ່າ 2 ລ້ານບາດ



ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າເມືອງ (ຕມ.), ຕຳຫຼວດສືບສວນນະຄອນບານ, ຕຳຫຼວດສືບສວນພາກ 2 ແລະ ຕຳຫຼວດທ່ອງທ່ຽວ ໄດ້ສົນທິກຳລັງບຸກເຂົ້າຊ່ວຍເຫຼືອຍິງຊາວຈີນ 2 ຄົນ ທີ່ຖືກຄົນຮ້າຍຊາວຈີນລັກພາຕົວກັກຂັງ ແລະ ຮຽກຄ່າໄຖ່ເປັນເງິນສູງເຖິງ 2 ລ້ານບາດ ຢູ່ພາຍໃນທີ່ພັກແຫ່ງໜຶ່ງໃນເມືອງພັດທະຍາ ຈັງຫວັດຊົນບຸລີ ໂດຍສາມາດຊ່ວຍຕົວປະກັນອອກມາໄດ້ຢ່າງປອດໄພ ພ້ອມຈັບກຸມຜູ້ກໍ່ເຫດໄດ້ທັນຄວັນ.

ຈຸດເລີ່ມຕົ້ນຂອງເຫດການ

ຈາກການສືບສວນ ແລະ ຄຳໃຫ້ການຂອງຜູ້ກໍ່ເຫດຊາວຈີນ ຊື່ ທ້າວ ຈ້ຽນ ຊຸຍ (Mr. Jian Cui) ລະບຸວ່າ ໄດ້ຮູ້ຈັກກັບຜູ້ເສຍຫາຍທັງສອງຜ່ານແອັບພລິເຄຊັນ Xiaohongshu ແລະ ໄດ້ນັດພົບກັນຢຸ່ຖະໜົນເຂົ້າສານ ບາງກອກ ໃນວັນທີ 16 ພະຈິກ ທີ່ຜ່ານມາ. ຈາກນັ້ນ ໃນວັນທີ 17-18 ພະຈິກ ໄດ້ຊັກຊວນກັນເດີນທາງໄປທ່ຽວທີ່ເມືອງພັດທະຍາ ກ່ອນທີ່ຜູ້ກໍ່ເຫດຈະພາທັງສອງຂຶ້ນລົດເຊົ່າໄປຍັງທີ່ພັກ ແລະ ກັກຂັງຕົວໄວ້.

ການຮຽກຄ່າໄຖ່ ແລະ ນາທີບຸກຊ່ວຍເຫຼືອ

ຜູ້ເສຍຫາຍທັງສອງໄດ້ຂາດການຕິດຕໍ່ກັບຄອບຄົວຕັ້ງແຕ່ວັນທີ 18 ພະຈິກ ຈົນກະທັ້ງວັນທີ 21 ພະຈິກ ໄດ້ມີການວິດີໂອຄໍຫາຍາດພີ່ນ້ອງເພື່ອຂໍຢືມເງິນ 500,000 ບາດ ແລະ ມີການຂົ່ມຂູ່ຮຽກເງິນຄ່າໄຖ່ເພີ່ມເຕີມລວມເປັນມູນຄ່າປະມານ 2 ລ້ານບາດ.

ພາຍຫຼັງໄດ້ຮັບແຈ້ງເຫດ ເຈົ້າໜ້າທີ່ຕຳຫຼວດໄດ້ເລັ່ງແກະຮອຍຈົນພົບສະຖານທີ່ກັກຂັງ ແລະ ວາງແຜນເຂົ້າຊ່ວຍເຫຼືອ. ໃນລະຫວ່າງການເຂົ້າຈັບກຸມຜູ້ກໍ່ເຫດເກີດອາການຄຸ້ມຄັ່ງ ໃຊ້ມີດຂົ່ມຂູ່ ແລະ ຈີ້ຄໍຕົວເອງດ້ວນກວ່າ 30 ນາທີ. ເຈົ້າໜ້າທີ່ຈຶ່ງຕັດສິນໃຈໃຊ້ປືນຊ່ອດໄຟຟ້າເຂົ້າສະຫຍົບ ແລະ ຄວບຄຸມຕົວໄວ້ໄດ້ສຳເລັດ ໂດຍທີ່ຍິງຊາວຈີນທັງ 2 ຄົນ ປອດໄພດີ.

ຄຳໃຫ້ການເບື້ອງຕົ້ນ

ໃນເບື້ອງຕົ້ນ ຜູ້ຕ້ອງຫາໄດ້ຮັບສາລະພາບວ່າເປັນຜູ້ກໍ່ເຫດແທ້ ແລະ ອ້າງວ່າໄດ້ຮັບເງິນໂອນຈາກຝ່າຍຜູ້ເສຍຫາຍໄປແລ້ວຈຳນວນ 30,000 ຢວນ. ປັດຈຸບັນເຈົ້າໜ້າທີ່ຕຳຫຼວດໄດ້ຄວບຄຸມຕົວຜູ້ກໍ່ເຫດໄປສອບສວນຂະຫຍາຍຜົນ ແລະ ດຳເນີນຄະດີຕາມກົດໝາຍຕໍ່ໄປ.

ທີ່ມາ: COP'S Magazine

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ ຂ່າວຕ່າງປະເທດ · 16:00 ໂມງ · ອ່ານ 12 ຄັ້ງ

ທຣຳປ້ ຈັດພິທີເວັ້ນຊີວິດໄກ່ງວງ 2 ໂຕ ເນື່ອງໃນວັນຂອບໃຈພະເຈົ້າ ກຽມສົ່ງໄປໃຊ້ຊີວິດທີ່ມະຫາວິທະຍາໄລເອແອນເອັມ ແຫ່ງລັດເທັກຊັດ



ປະທານາທິບໍດີ ໂດນັລ ທຣຳປ້ ພ້ອມດ້ວຍສະຕີໝາຍເລກໜຶ່ງ ຈັດພິທີອະໄພໂທດໃຫ້ໄກ່ງວງ 2 ໂຕ ຕາມປະເພນີ ໃນວັນຂອບໃຈພະເຈົ້າ (Thanksgiving Day) ກ່ອນ ຈະສົ່ງໄປໃຊ້ຊີວິດທີ່ມະຫາວິທະຍາໄລ Texas A&M.

ວັນທີ 25 ພະຈິກ 2026 ທ່ານ ໂດນັລ ທຣຳປ້ ປະທານາທິບໍດີສະຫະລັດ ພ້ອມດ້ວຍ ນາງ ເມລາເນຍ ທຣຳປ້ ສະຕີໝາຍເລກໜຶ່ງ ໄດ້ຈັດພິທີໄວ້ຊີວິດໄກ່ງວງ ປະຈຳປີ ເນື່ອງໃນເທດສະການ Thanksgiving ຢູ່ເດີ່ນ ຫຍ້າທາງດ້ານໃຕ້ຂອງທຳນຽບຂາວ ນະຄອນວໍຊິງຕັນ ດີຊີ. ໂດຍໄກ່ງວງ 2 ໂຕທີ່ໄດ້ຮັບການໄວ້ຊີວິດໃນປີນີ້ ມີຊື່ວ່າ "ຟຣີດອມ" (Freedom) ແລະ "ເຟເທີສ" (Feathers).

ລາຍງານຂ່າວລະບຸວ່າ ໄກ່ງວງທັງສອງໂຕຈະໄດ້ຮັບ ການຍົກເວັ້ນຈາກການຖືກນຳໄປປຸງແຕ່ງ ເປັນອາຫານໃນງານສະຫຼອງວັນ Thanksgiving ແລະຈະໄດ້ໃຊ້ຊີວິດທີ່ ເຫຼືອຢູ່ພາຍໃນມະຫາວິທະຍາໄລ Texas A&M ຫຼັງຈາກປະຊາຊົນຮ່ວມລົງຄະແນນ ຜ່ານທາງອອນລາຍ ເພື່ອເລືອກໄກ່ງວງຈາກ ລັດເວສເວີຈິເນຍ ທີ່ຈະໄດ້ຮັບກຽດ ເຂົ້າຮ່ວມພິທີ.

ໃນລະຫວ່າງພິທີ ທ່ານທຣຳປ້ ໄດ້ ກ່າວອວຍພອນໃຫ້ປະຊາຊົນອາເມລິກາມີ ຄວາມສຸກໃນເທດສະການ Thanksgiving ພ້ອມທັງກ່າວເຖິງຜົນ ງານຂອງລັດຖະບານ ກ່ອນຈະວາງມືລົງເທິງ ຫຼັງຂອງໄກ່ງວງຊື່ຟຣີດອມ ແລະປະກາດ ໄວ້ຊີວິດໃຫ້ມັນ ໂດຍລະບຸວ່າ ໄກ່ງວງ ທັງສອງໂຕຈະໄດ້ເລີ່ມຕົ້ນຊີວິດໃໝ່ຢູ່ໃນ ມະຫາວິທະຍາໄລ ແລະຈະໄດ້ຮ່ວມສົ່ງ ສຽງເຊຍທີມ Aggies ໃຫ້ຄວ້າໄຊຊະນະ ໃນການແຂ່ງຂັນກີລາ.

ທຳນຽບຂາວລະບຸວ່າ ພິທີໃນປີນີ້ ເປັນການໄວ້ຊີວິດໄກ່ງວງຄັ້ງທີ 79 ໂດຍ ປະເພນີນີ້ເລີ່ມຈັດຂຶ້ນເປັນປະຈຳທຸກປີໃນ ສະໄໝປະທານາທິບໍດີ ຈອດ H.W. ບຸຊ (George H.W. Bush) ໃນປີ 1989 ແລະໄດ້ກາຍເປັນໜຶ່ງໃນ ກິດຈະກຳສຳຄັນກ່ອນຮອດເທດສະການ ໃຫຍ່ຂອງຊາວອາເມລິກາ.

ທີ່ມາ: investing

◆ ຂ່າວຕ່າງປະເທດ · 22:08 ໂມງ · ອ່ານ 9 ຄັ້ງ

ສປ ຈີນ ສາມາດຜະລິດໄຟຟ້າເພີ່ມຂຶ້ນກວ່າ 10%



ວິທະຍຸ ໂທລະພາບ ສູນກາງຈີນ,ວັນທີ 25 ພະຈິກ ນີ້, ອົງການພະລັງງານ ແຫ່ງຊາດຈີນ ໄດ້ເປີດເຜີຍສະຖິຕິ ກ່ຽວກັບ ພະລັງງານໄຟຟ້າ ທົ່ວປະເທດຈີນ ລະຫວ່າງ ເດືອນມັງກອນ-ເດືອນຕຸລາປີນີ້. ນັບມາຮອດ ທ້າຍເດືອນຕຸ ລາແລ້ວນີ້, ຄວາມສາມາດ ຜະລິດໄຟຟ້າ ທົ່ວປະເທດຈີນ ມີເຖິງ 4 ຕື້ 160 ລ້ານ ກິໂລວັດ, ເພີ່ມຂຶ້ນ 10,9% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ. ໃນນັ້ນ, ຄວາມ ສາມາດ ຜະລິດໄຟຟ້າ ດ້ວຍພະລັງງານແສງຕາເວັນ ມີເຖິງ 1 ຕື້ 330 ລ້ານກິໂລວັດ, ເພີ່ມຂຶ້ນ 16,3% ; ຄວາມ ສາມາດຜະລິດໄຟຟ້າ ດ້ວຍພະລັງງານລົມມີເຖິງ 710 ລ້ານ ກິໂລວັດ, ເພີ່ມຂຶ້ນ 20% ເມື່ອທຽບໃສ່ໄລຍະດຽວກັນ ຂອງປີກາຍ.ຄວາມສາມາດຜະລິດໄຟຟ້າ ດ້ວຍພະລັງງານ ໃໝ່ຂອງ ສປ ຈີນໄດ້ເພີ່ມຂຶ້ນ ຢ່າງຕໍ່ເນື່ອງ, ບາດກ້າວການ ຫັນ ເປັນພະລັງງານສີຂຽວ ແລະການຫບອນຕ່ຳ ໄດ້ເລັ່ງໄວ ຂຶ້ນຢ່າງບໍ່ຢຸດຢັ້ງ./.

(ບັນນາທິການຂ່າວ: ຕ່າງປະເທດ) ຮຽບຮຽງ ຂ່າວ

ໂດຍ: ສະໄຫວ ລາດປາກດີ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 13:23 ໂມງ · ອ່ານ 9 ຄັ້ງ

ຊາວອາເມຣິກັນ 55% ໜູນລັດຖະບານຢຸດຕິສົງຄາມອີຣານທັນທີ ບໍ່ວ່າຈະຕ້ອງຍອມຮັບເງື່ອນໄຂໃດ



ຜົນສຳຫຼວດຂອງມະຫາວິທະຍາໄລແມຣິແລນພົບ ຜູ້ມີສິດເລືອກຕັ້ງສະຫະລັດສ່ວນໃຫຍ່ຕ້ອງການໃຫ້ລັດຖະບານຢຸດຕິສົງຄາມອີຣານທັນທີ ເຖິງແມ່ນຈະຕ້ອງຍອມຮັບເງື່ອນໄຂທີ່ເສຍປຽບ ໂດຍສະເພາະກຸ່ມຜູ້ສະໜັບສະໜຸນພັກເດໂມແຄຣັດທີ່ເຫັນດີເຖິງ 80%

ວັນທີ 25 ພະຈິກ 2026 ຜົນສຳຫຼວດຄວາມຄິດເຫັນຂອງຊາວອາເມຣິກັນຄັ້ງໃໝ່ພົບວ່າ ຜູ້ມີສິດເລືອກຕັ້ງໃນສະຫະລັດສ່ວນໃຫຍ່ຕ້ອງການໃຫ້ລັດຖະບານຢຸດຕິສົງຄາມລະຫວ່າງສະຫະລັດ-ອິດສະຣາເອນກັບອີຣານທັນທີ ເຖິງແມ່ນຈະຕ້ອງຍອມຮັບເງື່ອນໄຂທີ່ບໍ່ເປັນຜົນດີຕໍ່ຝ່າຍຕົນກໍຕາມ ໂດຍຜູ້ຕອບແບບສຳຫຼວດ 55% ເຫັນດີກັບແນວທາງຢຸດຕິສົງຄາມໃນຕອນນີ້ ບໍ່ວ່າຈະຕ້ອງຍອມຮັບເງື່ອນໄຂໃດ

ເມື່ອແຍກຕາມແນວໂນ້ມທາງການເມືອງ ພົບວ່າຜູ້ສະໜັບສະໜຸນພັກເດໂມແຄຣັດເຫັນດີກັບການຢຸດຕິສົງຄາມທັນທີ ຫຼາຍເຖິງ 80% ໃນຂະນະທີ່ກຸ່ມຜູ້ມີແນວຄິດອິດສະຫຼະເຫັນດີ 59% ສ່ວນຜູ້ສະໜັບສະໜຸນພັກຣີພັບບລິກັນເຫັນດີ 25%

ຜົນສຳຫຼວດຍັງພົບວ່າ ຜູ້ສະໜັບສະໜຸນພັກເດໂມແຄຣັດສ່ວນໃຫຍ່ຕ້ອງການໃຫ້ສະພາຄອງເກຣັດກົດດັນລັດຖະບານຂອງປະທານາທິບໍດີ ໂດນັລ ທຣຳ ເພື່ອຢຸດຕິຄວາມຂັດແຍ່ງ ໂດຍ 53% ສະໜັບສະໜຸນໃຫ້ສະພາຄອງເກຣັດຖົດຖອນອຸມັດງົບປະມານສຳລັບປະຕິບັດການທາງທະຫານ ແລະ 51% ເຫັນດີກັບການຕັດງົບສະໜັບສະໜຸນສົງຄາມອີຣານໃນການເຈລະຈາງົບປະມານຄັ້ງຕໍ່ໄປ ເຖິງແມ່ນແນວທາງນີ້ອາດສ່ຽງເຮັດໃຫ້ໜ່ວຍງານລັດຖະບານຕ້ອງຢຸດດຳເນີນງານຈາກບັນຫາງົບປະມານກໍຕາມ

ຜົນສຳຫຼວດດັ່ງກ່າວເຜີຍແຜ່ເມື່ອວັນທີ 24 ພະຈິກ 2026 ເປັນສ່ວນໜຶ່ງຂອງການສຳຫຼວດປະເດັນສຳຄັນ (Critical Issues Poll) ເຊິ່ງຈັດທຳໂດຍມະຫາວິທະຍາໄລແມຣິແລນຮ່ວມກັບບໍລິສັດຄົ້ນຄວ້າອິບໂຊສ (Ipsos) ໂດຍສອບຖາມຄວາມຄິດເຫັນຊາວອາເມຣິກັນ 1,022 ຄົນກ່ຽວກັບສົງຄາມອີຣານ

ທ່ານຊິບລີ ເທວຮາມີ (Shibley Telhami) ຫົວໜ້າທີມຄົ້ນຄວ້າ ກ່າວວ່າ ແປກໃຈກັບລະດັບການສະໜັບສະໜຸນໃຫ້ຢຸດຕິສົງຄາມໂດຍບໍ່ຄຳນຶງເຖິງເງື່ອນໄຂ ພ້ອມລະບຸວ່າ ທີມຄົ້ນຄວ້າຮູ້ຢູ່ແລ້ວວ່າປະຊາຊົນສ່ວນໃຫຍ່ບໍ່ເຫັນດີກັບສົງຄາມ ແລະ ຕ້ອງການໃຫ້ຢຸດຕິ ແຕ່ຍັງບໍ່ແນ່ໃຈວ່າພວກເຂົາຈະຍອມຮັບເງື່ອນໄຂແບບໃດເພື່ອໃຫ້ບັນລຸເປົ້າໝາຍນັ້ນ ໂດຍຜົນສຳຫຼວດສະທ້ອນຊັດເຈນວ່າ ກະແສຄວາມຄິດເຫັນຂອງປະຊາຊົນຕ້ອງການໃຫ້ສົງຄາມຢຸດຕິລົງໃນຕອນນີ້ ບໍ່ວ່າຈະຕ້ອງແລກດ້ວຍເງື່ອນໄຂໃດກໍຕາມ.

ທີ່ມາ: thairath

ຂ່າວຕ່າງປະເທດ · 11:22 ໂມງ · ອ່ານ 9 ຄັ້ງ

ຈີນປະສົບຜົນສຳເລັດໃນການສົ່ງຍານອະວະກາດ ເສີນໂຈ-24 (Shenzhou-24) ນຳພານັກບິນອະວະກາດ 3 ຄົນ ໄປຍັງສະຖານີອະວະກາດທຽນກົງ



ຈີນສົ່ງຍານອະວະກາດ ເສີນໂຈ-24 ນຳນັກບິນອະວະກາດ 3 ຄົນ ໄປຍັງສະຖານີອະວະກາດທຽນກົງ ໂດຍມີຄົນປາກົດສະຖານຮ່ວມເດີນທາງ ເປັນຄົນຕ່າງຊາດຄົນທຳອິດທີ່ໄດ້ຂຶ້ນໄປປະຈຳຢູ່ສະຖານີແຫ່ງນີ້

ວັນທີ 25 ພະຈິກ 2026 ຈີນປະສົບຜົນສຳເລັດໃນການສົ່ງຍານອະວະກາດ ເສີນໂຈ-24 (Shenzhou-24) ຂຶ້ນຈາກທະເລຊາຍໂກບີ ເພື່ອນຳພານັກບິນອະວະກາດ 3 ຄົນ ເດີນທາງໄປຍັງສະຖານີອະວະກາດທຽນກົງ (Tiangong) ໂດຍມີ ທ່ານ ມູຮຳໝັດ ຊີຊານ ອາລີ (Muhammad Zeeshan Ali) ນັກບິນອະວະກາດຊາວປາກິດສະຖານ ຮ່ວມໃນພາລະກິດຄັ້ງປະຫວັດສາດນີ້ ໃນຖານະຊາວຕ່າງຊາດຄົນທຳອິດທີ່ໄດ້ເດີນທາງຂຶ້ນໄປຍັງສະຖານີອະວະກາດແຫ່ງນີ້

ພິທີສົ່ງນັກບິນອະວະກາດປະຈຳພາລະກິດ ເສີນໂຈ-24 (Shenzhou-24) ເຊິ່ງປະກອບມີ ນັກບິນອະວະກາດຊາວຈີນ 2 ຄົນ ແລະ ຊາວປາກິດສະຖານ 1 ຄົນ ຈັດຂຶ້ນທີ່ສູນສົ່ງດາວທຽມຈິວສວນ ທາງພາກຕາເວັນຕົກສຽງເໜືອຂອງຈີນ ໃນວັນທີ 25 ພະຈິກ 2026.

ພາບ: ຊິນຫົວ / ລຽນ ເຈິ້ນ (Xinhua/Lian Zhen)

ສຳລັບນັກບິນອະວະກາດທັງ 3 ຄົນ ທີ່ຮ່ວມພາລະກິດຄັ້ງນີ້ ປະກອບມີ ທ່ານ ຖັງ ຫົງປໍ (Tang Hongbo) ເຮັດໜ້າທີ່ຜູ້ບັນຊາການພາລະກິດ ແລະ ນັກບິນຄວບຄຸມຍານອະວະກາດ, ທ່ານ ອູ້ ອີ້ (Wu Yi) ເປັນວິສະວະກອນການບິນ ແລະ ທ່ານ ມູຮຳໝັດ ຊີຊານ ອາລີ (Muhammad Zeeshan Ali) ນັກບິນອະວະກາດຊາວປາກິດສະຖານ ເຮັດໜ້າທີ່ຜູ້ຊ່ຽວຊານດ້ານອຸປະກອນທົດລອງ.

ພິທີສົ່ງນັກບິນອະວະກາດປະຈຳພາລະກິດ ເສີນໂຈ-24 (Shenzhou-24) ເຊິ່ງປະກອບມີ ນັກບິນອະວະກາດຊາວຈີນ 2 ຄົນ ແລະ ຊາວປາກິດສະຖານ 1 ຄົນ ຈັດຂຶ້ນທີ່ສູນສົ່ງດາວທຽມຈິວສວນ ທາງພາກຕາເວັນຕົກສຽງເໜືອຂອງຈີນ ໃນວັນທີ 25 ພະຈິກ 2026.

ພາບ: ຊິນຫົວ / ລຽນ ເຈິ້ນ (Xinhua/Lian Zhen)

ທ່ານ ອາລີ ນັບເປັນນັກບິນອະວະກາດຄົນຕ່າງຊາດຄົນທຳອິດທີ່ໄດ້ເດີນທາງໄປຢ້ຽມຢາມສະຖານີອະວະກາດທຽນກົງ. ຂະນະດຽວກັນ ພາລະກິດເສີນໂຈ-24 ຍັງຖືເປັນການບິນຮ່ວມກັນຄັ້ງທຳອິດລະຫວ່າງນັກບິນອະວະກາດຊາວ

ຕໍ່ໜ້າ 15

ຈີນປະສົບຜົນສຳເລັດໃນການສົ່ງຍານອະວະກາດ ເສິນໂຈ-24 ... (ຕໍ່ຈາກໜ້າ 14)

ຈີນ ແລະ ຊາວຕ່າງຊາດ ໃນປະຫວັດສາດໂຄງການອະວະກາດທີ່ມີນັກບິນປະຈຳການຂອງຈີນ.

ພິທີສົ່ງນັກບິນອະວະກາດປະຈຳພາລະກິດ ເສິນໂຈ-24 (Shenzhou-24) ເຊິ່ງປະກອບມີນັກບິນອະວະກາດຊາວຈີນ 2 ຄົນ ແລະ ຊາວປາກິດສະຖານ 1 ຄົນ ຈັດຂຶ້ນທີ່ສູນສົ່ງດາວທຽມຈິວສວນ ທາງພາກຕາເວັນຕົກສຽງເໜືອຂອງຈີນ ໃນວັນທີ 25 ພະຈິກ 2026.

ພາບ: ຊິນຫົວ / ລຽນ ເຈິ້ນ (Xinhua/Lian Zhen)

ການສົ່ງຍານຄັ້ງນີ້ ສະທ້ອນໃຫ້ເຫັນເຖິງການຂະຫຍາຍຄວາມຮ່ວມມືດ້ານອະວະກາດລະຫວ່າງຈີນ ແລະ ປາກິດສະຖານ ພ້ອມທັງເປັນອີກບາດກ້າວສຳຄັນຂອງໂຄງການສຳຫຼວດອະວະກາດທີ່ມີນັກບິນປະຈຳການຂອງຈີນ.

ທີ່ມາ: newsgd

◆ ຂ່າວຕ່າງປະເທດ · 14:32 ໂມງ · ອ່ານ 8 ຄັ້ງ

ຊັອກໂລກ! ນັກຮ້ອງສາວອີຣ່ານ ຖືກລົງໂທດຟາດດ້ວຍໄມ້ແສ້ ເຫດບໍ່ໄດ້ໃສ່ຜ້າຄຸມຫົວ (ຮິຢາບ) ຂຶ້ນຮ້ອງເພງອອນລາຍເມື່ອປີ 2024



ກາຍເປັນປະເດັນທີ່ສ້າງຄວາມສະເທືອນໃຈ ແລະ ຖືກວິພາກວິຈານຢ່າງໜັກໃນລະດັບນານາຊາດ ຫຼັງຈາກທະນາຍຄວາມຂອງ ປາຣາສຕູ ອາມາດີ (Parastoo Ahmadi) ນັກຮ້ອງສາວຊາວອີຣ່ານ ໄວ 29 ປີ ໄດ້ອອກມາຢືນຢັນວ່າ ລູກຄວາມຂອງຕົນ ແລະ ທີມງານອີກ 4 ຄົນ ໄດ້ຖືກທາງການອີຣ່ານບັງຄັບໃຊ້ບົດລົງໂທດ ໄມ້ແສ້ຟາດຄົນລະ 74 ບາດ ແລ້ວ ເມື່ອວັນທີ 23 ພະຈິກ 2026 ທີ່ຜ່ານມາ.

ເບື້ອງຫຼັງຄະດີຈາກຄອນເສີດອອນລາຍ

ຕາມການລາຍງານຂອງສຳນັກຂ່າວ BBC News ແລະ CNN ລະບຸວ່າ ເຫດການດັ່ງກ່າວມີຈຸດເລີ່ມຕົ້ນມາຈາກເດືອນທັນວາ ປີ 2024 ໂດຍ ປາຣາສຕູ ອາມາດີ ໄດ້ຈັດຄອນເສີດອອນລາຍແບບບໍ່ມີຜູ້ຊົມໃນສະຖານທີ່ຈິງ ຖ່າຍທອດສົດຜ່ານຊ່ອງ YouTube ຂອງຕົນເອງ ຈາກສະຖານທີ່ປະຫວັດສາດໃກ້ກັບເມືອງກອມ (Qom).

ໃນການສະແດງຄັ້ງນັ້ນ ນາງໄດ້ສວມຊຸດເດຣສແຂນກຸດສີດຳ ໂດຍບໍ່ໄດ້ໃສ່ຜ້າຄຸມຫົວ (ຮິຢາບ) ແລະ ຮ້ອງເພງດ່ຽວຮ່ວມກັບນັກດົນຕີຊາຍ ເຊິ່ງຄລິບດັ່ງກ່າວໄດ້ກາຍເປັນໄວຣັລໃນໂລກອອນລາຍ ແລະ ມີຍອດເຂົ້າຊົມຫຼາຍກວ່າ 3.2 ລ້ານເທື່ອ. ຢ່າງໃດກໍຕາມ ພາຍໃຕ້ກົດໝາຍທີ່ເຂັ້ມງວດຂອງອີຣ່ານ ແມ່ນຫ້າມບໍ່ໃຫ້ແມ່ຍິງຮ້ອງເພງດ່ຽວໃນທີ່ສາທາລະນະ ແລະ ບັງຄັບໃຫ້ແມ່ຍິງທຸກຄົນຕ້ອງສວມຜ້າຄຸມຮິຢາບ.

ຄຳຕັດສິນ ແລະ ບົດລົງໂທດທີ່ຮຸນແຮງ

ສານອາຍາເມືອງກອມ ໄດ້ຕັດສິນວ່ານາງ ແລະ ທີມງານມີຄວາມຜິດໃນຂໍ້ຫາ "ລະເມີດສິນລະທຳອັນດີຂອງສາທາລະນະ" ຈາກການເຜີຍແຜ່ເນື້ອຫາທີ່ບໍ່ເໝາະສົມທາງອອນລາຍ ໂດຍມີບົດລົງໂທດດັ່ງນີ້:

ລົງໂທດຂ້ຽນຄົນລະ 74 ບາດ: ຖືກບັງຄັບໃຊ້ໂທດຈິງແລ້ວທີ່ເມືອງກອມ ທັງຕໍ່ນັກຮ້ອງສາວ, ໂປຣດິວເຊີ ແລະ ນັກດົນຕີຊາຍອີກ 3 ຄົນ.

ຫ້າມເຮັດວຽກດ້ານສິລະປະ ແລະ ດົນຕີ ເປັນເວລາ 2 ປີ.

ຫ້າມເດີນທາງອອກນອກປະເທດ ເປັນເວລາ 2 ປີ.

ກະແສປະນາມຈາກນານາຊາດ

ຫຼັງຈາກຂ່າວການບັງຄັບໃຊ້ບົດລົງໂທດຖືກເຜີຍແຜ່ອອກໄປ ອົງກອນສິດທິມະນຸດສາກົນຢ່າງ Amnesty International ລວມເຖິງລັດຖະບານຫຼາຍປະເທດໃນຝ່າຍຕາເວັນຕົກ ຕ່າງກໍອອກມາປະນາມການກະທຳດັ່ງກ່າວຢ່າງຮຸນແຮງ ໂດຍຊີ້ວ່າການລົງໂທດດ້ວຍການຂ້ຽນຕີ ຖືເປັນການທໍລະມານທີ່ໂຮ້ມະນຸດສະທຳ ແລະ ເປັນການລະເມີດສິດເສລີພາບຂັ້ນພື້ນຖານຂອງແມ່ຍິງ.

ທີ່ມາ:BBC News, CNN, The Guardian

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ຂ່າວຕ່າງປະເທດ · 14:04 ໂມງ · ອ່ານ 7 ຄັ້ງ

ວິກິດອາຫານໂລກສ່ຽງຮຸນແຮງຂຶ້ນ! ເສັ້ນທາງການຄ້າສຳຄັນ 3 ສາຍຖືກກີດຂວາງ ກະທົບການຂົນສົ່ງອາຫານ



ອົງການອາຫານໂລກ (World Food Programme: WFP) ພາຍໃຕ້ສະຫະປະຊາຊາດ ໄດ້ອອກຄຳເຕືອນວ່າ ສະຖານະການສູ້ຮົບ ແລະ ຄວາມຂັດແຍ່ງໃນຫຼາຍພູມິພາກ ກຳລັງສົ່ງຜົນກະທົບຕໍ່ເສັ້ນທາງການຄ້າທາງທະເລ 3 ສາຍສຳຄັນຂອງໂລກ ປະກອບມີ ຊ່ອງແຄບຮໍມຸສ, ຊ່ອງແຄບບັບອັນມັນເດັບ ແລະ ທະເລດຳ. ການລົບກວນເສັ້ນທາງເຫຼົ່ານີ້ ເຮັດໃຫ້ການຂົນສົ່ງອາຫານ, ນ້ຳມັນ ແລະ ປຸ໋ຍການກະສິກຳມີຕົ້ນທຶນສູງຂຶ້ນ ແລະ ມີຄວາມລ່າຊ້າ ຊຶ່ງອາດຊ້ຳເຕີມວິກິດຄວາມອຶດຫິວ ແລະ ຄວາມບໍ່ໝັ້ນຄົງດ້ານອາຫານໃນຫຼາຍປະເທດທົ່ວໂລກ.

ເສັ້ນທາງການຄ້າທັ້ງ 3 ສາຍທີ່ກຳລັງປະເຊີນກັບຜົນກະທົບ ປະກອບມີ:

ຊ່ອງແຄບຮໍມຸສ (Strait of Hormuz): ເສັ້ນທາງຂົນສົ່ງນ້ຳມັນ ແລະ ປຸ໋ຍການກະສິກຳທີ່ສຳຄັນຂອງໂລກ ໂດຍປະມານ 30% ຂອງປຸ໋ຍທົ່ວໂລກຕ້ອງຜ່ານເສັ້ນທາງນີ້.

ຊ່ອງແຄບບັບອັນມັນເດັບ (Bab el-Mandeb): ເປັນເສັ້ນທາງສຳຄັນເຊື່ອມຕໍ່ທະເລແດງ ແລະ ຄອງຊູເອສ ເຊິ່ງເປັນຈຸດເຊື່ອມຕໍ່ການຄ້າລະຫວ່າງອາຊີ ແລະ ເອີຣົບ.

ທະເລດຳ (Black Sea): ເປັນເສັ້ນທາງສົ່ງອອກທັນຍາພືດທີ່ສຳຄັນຂອງຣັດເຊຍ ແລະ ຢູເຄຣນ ໂດຍມີບົດບາດສຳຄັນຕໍ່ການສະໜອງອາຫານໃຫ້ຫຼາຍປະເທດ.

ອົງການອາຫານໂລກແຫ່ງສະຫະປະຊາຊາດ ຫຼື WFP ໄດ້ເຕືອນເມື່ອບໍ່ດົນມານີ້ວ່າ, ເສັ້ນທາງການຄ້າສຳຄັນ 3 ສາຍ ຄື: ຊ່ອງແຄບຮໍມຸສ, ຊ່ອງແຄບມັນເດບ ແລະ ທະເລດຳ ຖືກກີດຂວາງຢ່າງຕໍ່ເນື່ອງ, ກຳລັງເຮັດໃຫ້ຕົ້ນທຶນດ້ານອາຫານ, ພະລັງງານ ແລະ ການຂົນສົ່ງຂອງໂລກເພີ່ມສູງຂຶ້ນ, ເຮັດໃຫ້ວິກິດການຄວາມໝັ້ນຄົງດ້ານອາຫານຮ້າຍແຮງຂຶ້ນ. ປັດຈຸບັນ, ມີປະມານ 266,000,000 ຄົນໃນທົ່ວໂລກປະເຊີນກັບບັນຫາຂາດແຄນອາຫານຢ່າງໜັກໜ່ວງ.

ຂະນະທີ່ການຂົນສົ່ງເຮືອບັນທຸກເຂົ້າສາລີ ແລະ ສາລີຜ່ານຊ່ອງແຄບບອສຟໍຣັສ ຫຼຸດລົງ 63% ໃນຊ່ວງເດືອນ ຕຸລາ 2026 ເມື່ອທຽບກັບໄລຍະດຽວກັນຂອງປີກ່ອນ.

ສະຖານະການນີ້ບໍ່ພຽງແຕ່ກະທົບຕໍ່ລາຄາອາຫານໃນຕະຫຼາດໂລກ ແຕ່ຍັງອາດສົ່ງຜົນຕໍ່ການຜະລິດກະສິກຳ ແລະ ການດຳລົງຊີວິດຂອງປະຊາຊົນໃນຫຼາຍປະເທດ ໂດຍສະເພາະປະເທດທີ່ພຶ່ງພາການນຳເຂົ້າອາຫານ.

ການລົບກວນເສັ້ນທາງຂົນສົ່ງບໍ່ໄດ້ສົ່ງຜົນສະເພາະຕໍ່ລາຄາອາຫານໃນປັດຈຸບັນເທົ່ານັ້ນ ແຕ່ຍັງອາດກະທົບຕໍ່ການຜະລິດກະສິກຳໃນອະນາຄົດ ເນື່ອງຈາກປຸ໋ຍ ແລະ ນ້ຳມັນມີລາຄາສູງຂຶ້ນ ສົ່ງຜົນໃຫ້ຕົ້ນທຶນການປູກຝັງ ແລະ ການຂົນສົ່ງອາຫານເພີ່ມຂຶ້ນ.

WFP ຈຶ່ງຮຽກຮ້ອງໃຫ້ປະເທດຕ່າງໆ ເລັ່ງຫາມາດຕະການເປີດທາງຂົນສົ່ງມະນຸດສະທຳ ແລະ ຮັບປະກັນໃຫ້ອາຫານສາມາດເດີນທາງໄປເຖິງປະຊາຊົນທີ່ກຳລັງປະສົບຄວາມອຶດຫິວ.

ທັ້ງນີ້ ສະຖານະການດັ່ງກ່າວຍັງຄົງເປັນປະເດັນທີ່ຕ້ອງຕິດຕາມ ເພາະຫາກຄວາມຂັດແຍ່ງຍືດເຍື້ອ ອາດຊ້ຳເຕີມວິກິດອາຫານ ແລະ ຄວາມອຶດຫິວໃນຫຼາຍປະເທດທົ່ວໂລກ.

ທີ່ມາ: (WFP)

ຂ່າວຕ່າງປະເທດ · 23:08 ໂມງ · ອ່ານ 2 ຄັ້ງ

ເສັ້ນທາງການຄ້າສຳຄັນ 3 ສາຍ ຖືກກີດຂວາງ ເຮັດໃຫ້ວິກິດການຄວາມໝັ້ນຄົງ ດ້ານອາຫານຂອງໂລກ ຮຸນແຮງຂຶ້ນ



ວິທະຍຸ ໂທລະພາບ ສູນກາງຈີນ,ເມື່ອບໍ່ດົນມານີ້,ອົງການອາຫານໂລກ ແຫ່ງສະຫະປະຊາຊາດ ຫລື WFP ໄດ້ເຕືອນວ່າ: ເສັ້ນທາງການຄ້າສຳຄັນ 3 ສາຍ ຄື: ຊ່ອງແຄບຮໍມຸສ, ຊ່ອງແຄບມັນເດບ ແລະທະເລດຳຖືກກີດຂວາງ ຢ່າງຕໍ່ເນື່ອງ,ກຳລັງເຮັດໃຫ້ຕົ້ນທຶນ ດ້ານອາຫານ,ພະລັງງານ ແລະການຂົນສົ່ງຂອງໂລກ ເພີ່ມສູງຂຶ້ນ,ເຮັດໃຫ້ວິກິດການຄວາມໝັ້ນຄົງດ້ານອາຫານຮ້າຍແຮງຂຶ້ນ.ປັດຈຸບັນ, ມີປະມານ 266.000.000 ຄົນ ໃນທົ່ວໂລກ ຜະເຊີນກັບ ບັນຫາຂາດແຄນອາຫານ ຢ່າງໜັກໜ່ວງ. WFP ຊີ້ອອກວ່າ:ປຸ໋ຍ ຈຳນວນປະມານ 30% ທົ່ວໂລກ ແມ່ນຂົນສົ່ງໂດຍຜ່ານຊ່ອງແຄບຮໍມຸສ, ເສັ້ນທາງການຄ້າ ຖືກກີດຂວາງບວກກັບການປະທະກັນໃນພາກພື້ນ ແລະສະພາບດິນຟ້າອາກາດຮ້າຍແຮງ, ກຳລັງສົ່ງຜົນກະທົບ ຕໍ່ການຜະລິດກະສິກຳ ແລະການສະໜອງອາຫານ. WFP ຮຽກຮ້ອງ ໃຫ້ປະຊາຄົມໂລກ ນຳໃຊ້ມາດຕະການເພື່ອຮັບປະກັນເສັ້ນທາງ ການຄ້າອາຫານ ທົ່ວໂລກຢ່າງໂລ່ງລ່ຽນ ແລະປ້ອງກັນບໍ່ໃຫ້ອາຫານ ຖືກນຳໃຊ້ເປັນເຄື່ອງມືໃນ ສົງຄາມ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄໝ ລາດປາກດີ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ

EMERGING DIGITAL SOLUTIONS

ແນວຄິດ → ອອກແບບ → ເປີດໃຊ້ງານ

ຮັບອອກແບບ ແລະ ພັດທະນາ ເວັບໄຊທ໌ · ແອັບ · ລະບົບທຸລະກິດ

ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ

ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້



ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 12/11/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 37,360**	**▼ 32,330**	**▼ 32,400**
ແຂວງວຽງຈັນ	▼ 37,360	▼ 32,330	▼ 32,400
ຜົ້ງສາລີ	▼ 38,350	▼ 33,320	▼ 33,390
ຫຼວງນ້ຳທາ	▼ 37,850	▼ 32,830	▼ 32,890
ອຸດົມໄຊ	▼ 38,030	▼ 33,000	▼ 33,070
ບໍ່ແກ້ວ	▼ 37,460	▼ 32,430	▼ 32,500
ຫຼວງພະບາງ	▼ 37,870	▼ 32,840	▼ 32,910
ຫົວພັນ	▼ 37,870	▼ 32,840	▼ 32,910
ໄຊຍະບຸລີ	▼ 37,680	▼ 32,660	▼ 32,730
ຊຽງຂວາງ	▼ 37,560	▼ 32,520	▼ 32,590
ໄຊສົມບຸນ	▼ 37,780	▼ 32,750	▼ 32,830
ບໍລິຄຳໄຊ	▼ 37,410	▼ 32,380	▼ 32,450
ຄຳມ່ວນ	▼ 37,390	▼ 32,360	▼ 32,430
ສະຫວັນນະເຂດ	▼ 37,390	▼ 32,360	▼ 32,430
ສາລະວັນ	▼ 37,640	▼ 32,620	▼ 32,690
ເຊກອງ	▼ 37,640	▼ 32,610	▼ 32,690
ຈຳປາສັກ	▼ 37,420	▼ 32,390	▼ 32,460
ອັດຕະປື	▼ 37,690	▼ 32,660	▼ 32,730

ແຫຼ່ງ: ລາຍງານລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (22/10)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

02/12		ວັນສະຖາປະນາ ສປປ ລາວ · ວັນພຣະ
09/12		ວັນພຣະ
10/12		ເດືອນຈຽງ
13/12		ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 25/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▼ 22,328	▼ 22,668
THB ບາດ ໄທ	▲ 665.73	▲ 679.02
CNY ຢວນ ຈີນ	▲ 3,343	▲ 3,409
EUR ເອີໂຣ	▼ 24,386	▼ 24,871
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▼ 139.82	▼ 142.60
SGD ໂດລາ ສິງກະໂປ	▼ 16,979	▼ 17,651
GBP ປອນ ອັງກິດ	▲ 29,153	▲ 29,731

ສະເລ່ຍທະນາຄານ (ທຫລ): USD ຊື້ 22,444 · ຂາຍ 22,667 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳແທ່ງ 1 ບາດ

39,090,000

▼ 790,000

ຄຳແທ່ງ 99.99% · 1 ກຣາມ

2,622,600

▼ 71,800

ອັບເດດ 26/11 05:30 · mahaxan.com/today/gold

ຫວຍພັດທະນາ

ງວດ 204

ອອກວັນທີ 25/11/2026

261801

ງວດ 203 · 24/11	230179
ງວດ 202 · 23/11	575791
ງວດ 201 · 20/11	603947
ງວດ 200 · 19/11	928727

ພະຍາກອນອາກາດ

ວັນພະຫັດ 26 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	20.9–29.8°C	ເມກບາງສ່ວນ
ຫຼວງພະບາງ	18.2–25.9°C	ເມກບາງສ່ວນ
ໂພນສະຫວັນ	15.0–24.2°C	ເມກບາງສ່ວນ
ຊຳເໜືອ	13.7–23.2°C	ມີຝົນ
ສະຫວັນນະເຂດ	19.9–30.5°C	ເມກບາງສ່ວນ
ປາກເຊ	21.4–31.5°C	ເມກບາງສ່ວນ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ

ແຈ້ງການມອດໄຟ ວັນທີ 26,27,30/11/2026



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ລັດວິສາຫະກິດໄຟຟ້າລາວ
ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ
ສາຂານະຄອນຫຼວງວຽງຈັນ 1

ເລກທີ 2561/ຟຟລ.ຝຄລກ.ນວ1
ນະຄອນຫຼວງວຽງຈັນ, ວັນທີ...2 3 NOV 2026

ແຈ້ງການມອດໄຟ

ອ້າງເຖິງ : ຜູ້ຊົມໃຊ້ໄຟຟ້າ, ເບື້ອງຈາກ ບໍລິສັດ ລັດວິສາຫະກິດໄຟຟ້າລາວ, ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ, ສາຂານະຄອນຫຼວງວຽງຈັນ 1, ຈະໄດ້ມອດໄຟເພື່ອເຂົ້າວຽກການບຸ້ມບ້ານ, ໂຮງຈັກໂຮງໜຶ, ສຳນັກງານຕ້ອງການຂອງລັດ ແລະ ເຂດເຊິ່ນເພື່ອຍັບຍາ.

ເລື່ອງ : ຍ້ມອດໄຟ 22 kV MSS 9.2 ສະຖານີໄຟຟ້າໂຄກສະອາດ

- ອ້າງເຖິງໜັງສືບ້ານ ສະບັບເລກທີ 512/ຟຟລ.ຄຄກ.ພຄກ.ຄນ0 ລົງວັນທີ 23/11/2026.

ສາຂານະຄອນຫຼວງວຽງຈັນ 1, ຂໍຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າຊາບວ່າ ໃນວັນທີ 26-27-30/11/2026 ເວລາ 07:00 - 17:00 ໂມງ, (ລວມເວລາ 10 ຊົ່ວໂມງ) ຈະໄດ້ມອດໄຟໃຫ້ບໍລິສັດ ຜູ້ຮັບໝໍ້ກໍ່ສ້າງ CCPG ເພື່ອປະຕິບັດວຽກ ກໍ່ສ້າງຕາຖຸນເລກ AN.80 ໃນຮ້ອຍ ບ້ານ ໂຊກນ້ອຍ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ມອດແຕ່ຈຸດປົດຮ້ອ ພື້ນທະເຂດເສດຖະກິດຕາວເລວໄຊເສດຖາ ຫາ ແລວໄຟສຸດ. ລາຍລະອຽດເຂດທີ່ມີການມອດໄຟມີດັ່ງລຸ່ມນີ້:

1. ບ້ານໂຊກນ້ອຍ ເຂດເສດຖະກິດໄຊເສດຖາ.
2. ເຂດເສດຖະກິດຕາວເລວໄຊເສດຖາ.
3. ບໍລິສັດ ສຸພານິດ.
4. ຮ້ານອາຫານຈີນ.
5. ເຊິ່ງເປັນເຂດໃນເຂດດັ່ງກ່າວ.
6. ເຂດໃຫ້ແມ່ນປະຊາຊົນ, ບ້ານຍັກ, ໂຮງແຮມ ແລະ ຫ້ອງຮ້ານທີ່ເຈາະການຍື່ນບຸ ບໍ່ມີເວນດັ່ງກ່າວ.

ໝາຍເຫດ: ເອກະສານສະບັບນີ້ມອດ 3 ມື້ ວັນທີ 26-27-30/11/2026

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າເພື່ອຍັບຍາ ເພື່ອຫາເວີທີກະກຽມ ແລະ ສ້ຳງວ່ຽນໃຊ້ທົດແທນໄວ້ລ່ວງໜ້າຢ່າງຕໍ່ເຈຶ່ງກັນ ແລະ ຂໍຂະໄພໃນຄວາມບໍ່ສະດວກຄັ້ງນີ້ດ້ວຍ.

ຂຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ.

ຫົວໜ້າສາຂານະຄອນຫຼວງວຽງຈັນ 1

ທະນົງສັກ ທອງສະຫວັນ

ຖະໜົນ... ບ້ານ... ເມືອງ... ນະຄອນຫຼວງ... ໂທ: (856-21) 254121, ແຟັກ: (856-21) 254121, ອີເມວ: ... ເວັບ: www.[illegible].com

ແຈ້ງການ

ແຈ້ງການມອດໄຟ ວັນທີ 27,28,29/11/2026 (ອັບເດດເພີ່ມຕື່ມ)



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ລັດວິສາຫະກິດໄຟຟ້າລາວ
ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ
ສາຂານະຄອນຫຼວງວຽງຈັນ 1

ເລກທີ 2571/ຟຟລ.ຝຄລກ.ນວ1
ນະຄອນຫຼວງວຽງຈັນ, ວັນທີ...2 5 NOV 2026

ແຈ້ງການມອດໄຟ

ເຖິງ : ຜູ້ຊົມໃຊ້ໄຟຟ້າ ຕາມຄຸ້ມບ້ານ, ໂຮງຈັກ, ໂຮງງານ, ສຳນັກງານຕ້ອງການຂອງພາກລັດ ແລະ ເຂດເຊິ່ນເພື່ອຍັບຍາ.

ເລື່ອງ : ຍ້ມອດໄຟ 22 kV ສາຍແຈຈາ MSS 3.6 ສະຖານີໄຟຟ້າທາດຫຼວງ.

- ອີງຕາມໃບກິດສຳພັນ ສະບັບເລກທີ 2696/ຝຄລກ.ນວ1.ຕນ-ບສ ລົງວັນທີ 23.11.2026

ສາຂານະຄອນຫຼວງວຽງຈັນ 1, ຂໍຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າຊາບວ່າ ໃນວັນທີ 28/11/2026 ເວລາ 09:00 - 13:30 ໂມງ, (ລວມເວລາ 04 ຊົ່ວໂມງ 30 ນາທີ) ຈະໄດ້ມອດໄຟໃຫ້ບໍລິສັດ ສອນ-ໄຊສະນະ ຕິດຕັ້ງໄຟຟ້າ ຈຳກັດຜູ້ດຽວ. ເພື່ອປະຕິບັດວຽກ ຖອນສາຍ 12 ແມັດ (ຈຳນວນ 2 ຕົ້ນ) ໃນຂົງເຂດ ບ້ານ ໃນສະຫວ່າງ ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ມອດແຕ່ SF6 ໜ້ຳປ໋ຳມັນອັ່ງຊາຍ ຫາ VCB80078 ປ໋ຳມັນ PTT ດົ່ງຈອງ. ລາຍລະອຽດເຂດທີ່ມີການມອດໄຟມີດັ່ງລຸ່ມນີ້:

1. ບ້ານໃນສະຫວ່າງ.
2. ປ໋ຳມັນອັ່ງຊາຍ.
3. ໂຮງກະດິ.
4. ໂຮງງານຄອນກີດ ມາລີ.
5. ໂຮງງານຢາລາສຕິກ.
6. ຄີນິກ ດອກເຕີນລີ.
7. ບໍລິສັດພັດທະນາຄະສິຫຼາລີນມະຊັ້ນ.
8. ບໍລິສັດ CNC ກາຫຍ.
9. ບໍລິສັດ KT ກຸ່ນຈຳກັດ.
10. ວັດໃນສະຫ.
11. ໂຮງແຮມສາຍທອງເກົ່ອປະເສີດ.
12. ປ໋ຳມັນ PTT ບ້ານດົ່ງຈອງ.
13. ໜ້ຳແປງສ່ວນຄົວຈຳນວນໜຶ່ງ.
14. ເຮືອນປະຊາຊົນ, ໂຮງແຮມ, ບ້ານພັກ ແລະ ຮ້ານຄ້ຳຂາຍເຄື່ອງຍ່ອຍຕ່າງໆ ໃນເຂດດັ່ງກ່າວ.

ໝາຍເຫດ: ຖ້າຜິນບໍ່ຄົກຈະໄດ້ມອດໄຟຕາມໃນແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າເພື່ອຍັບຍາ ເພື່ອຫາເວີທີກະກຽມ ແລະ ສ້ຳງວ່ຽນໃຊ້ທົດແທນໄວ້ລ່ວງໜ້າຢ່າງຕໍ່ເຈຶ່ງກັນ ແລະ ຂໍຂະໄພໃນຄວາມບໍ່ສະດວກຄັ້ງນີ້ດ້ວຍ.

ຂຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ.

ຫົວໜ້າສາຂານະຄອນຫຼວງວຽງຈັນ 1

ທະນົງສັກ ທອງສະຫວັນ

ຖະໜົນ... ບ້ານ... ເມືອງ... ນະຄອນຫຼວງ... ໂທ: (856-21) 254121, ແຟັກ: (856-21) 254121, ອີເມວ: ... ເວັບ: www.[illegible].com

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນພຸດ 25 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.